# ການວິເຄາະລະບົບສະຖາບັນ ແລະ ກົດໝາຍ ແລະ ກອບວຽກສຳລັບການ ຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ

ບົດລາຍງານສຳລັບການສ້າງຄວາມເຂັ້ມແຂງທາງດ້ານສະຖາບັນ ແລະ ການພັດທະນາຄວາມສາມາດ
ຂອງໂຄງການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ
ອົງການສະຫະປະຊາດເພື່ອການພັດທະນາປະຈຳ ສປປ ລາວ ແລະ
ລັດຖະບານ ສປປ ລາວ
ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ
ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກໝາຍໂຄງການ: 0074178

ຂຽນໂດຍທ່ານ Earl Janes Goodyear, Ph.D
ທີ່ປຶກສາດ້ານການຫລຸດຜ່ອນຄວາມສ່ຽງໄພພິບັດ

ວັນທີ 25 ມີນາ, 2011

## ການປະເມີນດ້ານກົດໝາຍ ແລະ ສະຖາບັນ
## ກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ

**ພາກສັງລວມ**

1. ເອກະສານສະບັບນີ້ໄດ້ຖືກສ້າງຂຶ້ນໂດຍມີເປົ້າໝາຍລວມເພື່ອສົ່ງເສີມໃຫ້ມີຄວາມເຂົ້າໃຈຕໍ່ກັບສະພາບໃນປະຈຸບັນຂອງລະບົບທາງດ້ານສະຖາບັນ ແລະ ກົດໝາຍ ແລະ ກອບວຽກສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ. ມັນໄດ້ສະທ້ອນໃຫ້ເຫັນລັດຖະບານ ສປປ ລາວ, ອົງການສະຫະປະຊາຊາດ ແລະ ບັນດາອົງການໃຫ້ທຶນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ວົງສາຄະນາຍາດສາກົນທີ່ກ່ຽວຂ້ອງກັບການຫລຸດຜ່ອນຄວາມສ່ຽງໄພພິບັດທີ່ມີຄວາມສົນໃຈເພື່ອສະໜັບສະໜູນບັນດາຈຸດປະສົງແຜນປະຕິບັດງານຂອງກອບວຽກ ຮຽວໂກ (Hyogo) ໃນການສ້າງຄວາມພ້ອມໃຫ້ແກ່ສັງຄົມເພື່ອຕອບໂຕ້ກັບໄພພິບັດແບບຍືນຍົງ.

2. ຈຸດປະສົງຂອງເອກະສານສະບັບນີ້ກໍ່ເພື່ອຊີ້ໃຫ້ເຫັນຈຸດດີ ແລະ ຈຸດຄົງຄ້າງຢູ່ໃນຄວາມສາມາດທາງດ້ານກົດໝາຍ ແລະ ທາງດ້ານສະຖາບັນຂອງ ສປປ ລາວ ໃນການຮັບມືກັບໄພອັນຕະລາຍ ແລະ ຄວາມສ່ຽງທີ່ຈະກາຍເປັນສະພາບສຸກເສີນໄພພິບັດແບບສະຫລັບສັບຊ້ອນ. ປະເດັນທີ່ 2 ກໍ່ຄືເອກະສານສະບັບນີ້ໄດ້ວິເຄາະຄວາມສ່ຽງເພື່ອກຳນົດຊ່ອງຫວ່າງຂອງບັນດາປັດໃຈພື້ນຖານຫລັກ ໆ ໃນເມື່ອເຮັດການກະກຽມສຳລັບການຕອບໂຕ້ກັບໄພອັນຕະລາຍຕ່າງ ໆ ທີ່ເກີດຂຶ້ນທາງທຳມະຊາດ ແລະ ເກີດຈາກມະນຸດ. ປະເດັນທີ 3 ກໍ່ຄືວ່າເອກະສານສະບັບນີ້ເປັນການຂຽນຮ່າງເຄື່ອງມືທາງດ້ານນິຕິກຳຊຶ່ງມີຈຸດປະສົງເພື່ອຫລຸດຜ່ອນບັນດາອຸປະສັກທາງດ້ານກົດໝາຍ ແລະ ທາງດ້ານນະໂຍບາຍຊຶ່ງໃນຂະນະດຽວກັນນັ້ນກໍ່ເປັນການສົ່ງເສີມບັນດາຂໍ້ສະເໜີແນະຢ່າງມີປະສິດທິຜົນໃນລະດັບຊາດ ແລະ ສາກົນໃນດ້ານການປະຕິບັດສຳລັບບັນດາພາກສ່ວນກ່ຽວຂ້ອງເພື່ອພິຈາລະນາໃນການພັດທະນາແຜນງານທີ່ຈະປະກອບສ່ວນໃຫ້ແກ່ການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຫລຸດຜ່ອນຄວາມສ່ຽງໄພພິບັດຢູ່ໃນລະດັບປະເທດ, ລະດັບ

ແຂວງ, ເມືອງ ແລະ ຂັ້ນບ້ານໃນຂະນະທີ່ປະຕິບັດຍຸດທະສາດໃນການພັດທະນາບຸລິມະສິດດັ່ງທີ່ໄດ້ກຳນົດໄວ້ຢູ່ໃນແຜນການພັດທະນາເສດຖະກິດສັງຄົມ 5 ປີຂອງໄລຍະຕໍ່ໄປ.

3. ສຳລັບວຽກທີ່ໄດ້ຖືກປະຕິບັດຢ່າງກວ້າງຂວາງໂດຍສະຫະພັນກາແດງສາກົນ ແລະ ແຜນງານຂອງສະມາຄົມກາແດງ 4 ວົງເດືອນໃນການຕອບໂຕ້ກັບໄພພິບັດດ້ວຍກົດໝາຍ, ລະບຽບການ ແລະ ຫລັກການຕ່າງ ໆໃນປີ 2009 ໄດ້ຖືກພິຈາລະນາວ່າເປັນການສຶກສາທາງດ້ານບັນຖັດຖານອັນໜຶ່ງໂດຍການນຳໃຊ້ບັນດາຂໍ້ແນະນຳສຳລັບການໃຫ້ການຊ່ວຍເຫລືອບັນເທົາທຸກ ແລະ ຟື້ນຟູເບື້ອງຕົ້ນທີ່ເກີດຈາກໄພພິບັດໃນລະດັບສາກົນ (IDLA) ສະບັບປີ 2007 ແລະ ບັນດາລະບຽບການທາງດ້າສາທາລະນະສຸກສາກົນໃນປີ 2005 (IHR) ເພື່ອພັດທະນາບັນດາຂໍ້ສະເໜີແນະ. ບັນດາຂໍ້ສະເໜີແນະຈາກບົດລາຍງານທີ່ມີຊື່ວ່າກອບວຽກທາງດ້ານສະຖາບັນ ແລະ ກົດໝາຍສຳລັບສະພາບສຸກເສີນທາງດ້ານໄພພິບັດ ແລະ ພະຍາດຕິດຕໍ່ໃນ ສປປ ລາວ ໄດ້ຖືກທົບທວນ ແລະ ຮັບການເອົາໃຈໃສ່ໃນການພັດທະນາໃຫ້ມີຂໍ້ສະເໜີແນະເພື່ອຕິດຕາມ ແລະ ໃນການສ້າງໃຫ້ມີເຄື່ອງມືທາງດ້ານກົດໝາຍ.

4. ໃນ ສປປ ລາວ, ຈະມີການເນັ້ນໜັກວຽກງານໃສ່ການຕອບໂຕ້ໄພພິບັດທາງທຳມະຊາດເຊັ່ນວ່ານ້ຳຖ້ວມ, ລົມພະຍຸ, ດິນເຈື່ອນ ແລະ ໄພແຫ້ງແລງໂດຍເພີ່ມເຕີມໃສ່ກັບໄພພິບັດທີ່ເກີດຈາກມະນຸດເປັນຕົ້ນແມ່ນໄຟໄໝ້ ແລະ ອຸບັດຕິເຫດທາງອຸດສາຫະກຳເປັນຕົ້ນແມ່ນກາດອາຍມົນລະພິດ ແລະ ລະເບີດຝັງດິນບໍ່ທັນແຕກທີ່ຕົກຄ້າງທາງສົງຄາມ. ນອກຈາກການຝຶກອົບຮົມໃນດ້ານການສ້າງຄວາມພ້ອມທີ່ຈັດໂດຍອົງການກາແດງລາວ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຈຳນວນໜຶ່ງ ແລະ ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດຊຶ່ງພົວພັນກັບແຜນງານຂອງອົງການໃຫ້ທຶນຄວາມສ່ຽງຈາກໄພອັນຕະລາຍຕ່າງ ໆບໍ່ໄດ້ຮັບການເອົາໃຈໃສ່ ຫລື ມີການເອົາໃຈໃສບໍ່ຫລາຍຈົນກວ່າຈະເກີດມີເຫດການຄວາມສ່ຽງຕົວຈິງກັບປະຊາຊົນຢູ່ເຂດຕົວເມືອງ ຫລື ຊົນນະບົດ. ແຜນການພັດທະນາແຫ່ງຊາດຂອງ ສປປ ລາວ ຍັງບໍ່ທັນໄດ້ເອົາໃຈໃສ່ແຜນການຄຸ້ມຄອງໄພພິບັດແຫ່ງຊາດຢ່າງລະອຽດເທື່ອຊຶ່ງເປັນແຜນການທີ່ສາມາດສະໜອງວິທີການໃນການປ້ອງກັນຜົນກະທົບຈາກບັນດາໂຄງການລົງທຶນລະດັບຊາດໃນການພັດທະນາໃນດ້ານການສ້າງຄວາມພ້ອມ, ການຫລຸດຜ່ອນ ແລະ ລະບົບການເຕືອນໄພລ່ວງໜ້າເພື່ອການຕອບໂຕ້ຢ່າງໄວວາກັບໄພພິບັດທີ່ເກີດຂຶ້ນແບບຊ້າ ໆ ແລະ ການສ້າງເຄືອຄ່າຍໃໝ່ທີ່ເປັນການລວມພະລັງແຮງໃນບັນດາ

ພາກສ່ວນກ່ຽວຂ້ອງກັບ ການຄຸ້ມຄອງໄພພິບັດທັງໝົດທີ່ຈະສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາກົນໄກຕອບໂຕ້ກັບສະພາບສຸກເສີນ.

5. ການຕອບໂຕ້ເຫດການໄພພິບັດຕ່າງ ໆແມ່ນຂຶ້ນກັບວັດຖຸປັດໃຈ ແລະ ກຳລັງແຮງຂອງມະນຸດຂອງລັດຖະບານຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ແລະ ໂດຍໄດ້ຮັບການຊ່ວຍເຫລືອຈາກບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຜູ້ໃຫ້ທຶນໃນລະດັບສາກົນ. ຢ່າງໃດກໍ່ຕາມຄວາມສາມາດທາງດ້ານອົງການຈັດຕັ້ງໃນລະດັບສູນກາງ ແລະ ຂັ້ນແຂວງ, ການເຂົ້າເຖິງອຸປະກອນທາງດ້ານວິຊາການ, ການຝຶກອົບຮົມ ແລະ ຊັບພະຍາກອນທາງການເງິນ ແລະ ການຂາດອຳນາດຕັດສິນທີ່ເຂັ້ມແຂງຢູ່ຂັ້ນສູນກາງສຳລັບການວາງແຜນດ້ານຍຸດທະສາດລະຫວ່າງບັນດາພາກສ່ວນກ່ຽວຂ້ອງທັງໝົດ, ລວມທັງບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງພື້ນຖານສັງຄົມໄດ້ພາໃຫ້ລະບົບການຄຸ້ມຄອງໄພພິບັດຂອງ ສປປ ລາວ ບໍ່ມີຄວາມເຂັ້ມແຂງເທົ່າທີ່ຄວນ.

6. ກອບວຽກທາງດ້ານກົດໝາຍສຳລັບການຄຸ້ມຄອງໄພພິບັດໂດຍຕົ້ນຕໍແລ້ວແມ່ນປະກອບມີບັນດາມະຕິ ແລະ ຂໍ້ຕົກລົງເທົ່ານັ້ນແທນທີ່ຈະມີກົດໝາຍສະບັບໜຶ່ງທີ່ກວມລວມ. ດຳລັດຂອງນາຍົກລັດຖະມົນຕີເລກທີ 158 ສະບັບປີ 1999 ຊຶ່ງປະຈຸບັນໄດ້ມີການດັດແກ້ແລ້ວນັ້ນໄດ້ມີການອະນຸມັດໃຫ້ສ້າງຕັ້ງຄະນະກຳມະການໄພພິບັດແຫ່ງຊາດ (NDMC). ດຳລັດດັ່ງກ່າວໄດ້ແຕ່ງຕັ້ງຜູ້ຕາງໜ້າຈາກຫລາຍກະຊວງ, ອົງການຝ່າຍວິຊາການ ແລະ ສະພາກາແດງລາວໃນຖານະທີ່ເປັນສະມາຊິກຂອງ NDMC ແລະ ໄດ້ສະເໜີໃຫ້ມີການສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດຢູ່ຂັ້ນແຂວງ ແລະ ຂັ້ນເມືອງ. ດຳລັດດັ່ງກ່າວໄດ້ຖືກຜັນຂະຫຍາຍໂດຍມີການອອກຂໍ້ຕົກລົງເລກທີ 097 ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມທີ່ໄດ້ກຳນົດລະອຽດພາລະບົດບາດຂອງກອງເລຂາ ແລະ ຂອງຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO), ແລະ ໄດ້ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະສາຊິກຂອງ MDMC. NDMC ແລະ NDMO ໃນປະຈຸບັນແມ່ນພາກສ່ວນຕົ້ນຕໍທີ່ມີຄວາມຮັບຜິດຊອບໃນການຄຸ້ມຄອງໄພພິບັດໃນ ສປປ ລາວ.

7. ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ຮັບເອົາຄວາມຮັບຜິດຊອບໃນການຄຸ້ມຄອງຄວາມສ່ຽງໄພພິບັດໃນປີ 1995 ແລະ ໄດ້ສ້າງຕັ້ງຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດຂຶ້ນໃນປີ 1997.

NDMC ແລະ NDMO ປະຈຸບັນແມ່ນພາກສ່ວນຕົ້ນຕໍທີ່ຮັບຜິດຊອບໃນການຄຸ້ມຄອງໄພພິບັດຕ່າງ ໆ ໃນ ສປປ ລາວ. NDMO ໄດ້ຮັບໜ້າທີ່ເປັນກອງເລຂາຂອງ NDMC ຊຶ່ງປະກອບມີຄວາມຮັບຜິດຊອບ ຫລາຍດ້ານເຊັ່ນ: (a) ໃຫ້ຄໍາປຶກສາລະດັບຊ່ຽວຊານໃຫ້ແກ່ MDMC; (b) ສົ່ງເສີມການປະສານງານກັບ ບັນດາຈຸດປະສານງານຂອງກະຊວງຕ່າງ ໆ; (c) ສົ່ງເສີມກິດຈະກໍາການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ສ້າງຄວາມພ້ອມຢູ່ຂັ້ນທ້ອງຖິ່ນ; (d) ຈັດຕັ້ງປະຕິບັດກິດຈະກໍາປຸກຈິດສໍານຶກຂັ້ນຊຸມຊົນ; (e) ຈັດການຝຶກອົບຮົມ, ໃຫ້ມີຄໍາແນະນໍາ ແລະ ເຮັດການວາງແຜນເພື່ອເຮັດໃຫ້ການຄຸ້ມຄອງຄວາມສ່ຽງ ໄພພິບັດມີປະສິດທິຜົນຫລາຍຂຶ້ນ.

8. ໃນປີ 2003 ປະທານຂອງ NDMC ໄດ້ອອກຂໍ້ຕົກລົງຊຶ່ງໄດ້ກໍານົດແຜນຍຸດທະສາດກ່ຽວກັບການ ຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ ພ້ອມກັບແຜນປະຕິບັດງານອັນໜຶ່ງສໍາລັບການຄຸ້ມຄອງຄວາມ ສ່ຽງໄພພິບັດສໍາລັບໄລຍະຮອດປີ 2020. ໂດຍໄດ້ຮັບການຊ່ວຍເຫລືອຈາກ UNDP, NDMO ໃນປະຈຸ ບັນກໍາລັງສ້າງແຜນການລະອຽດສໍາລັບການຄຸ້ມຄອງໄພພິບັດລະດັບຊາດໂດຍສອດຄ່ອງກັບແຜນຍຸດທະ ສາດດັ່ງກ່າວ. ລະດັບຂອງການບັນລຸຈຸດປະສົງຕາມທີ່ໄດ້ກໍານົດໄວ້ພາຍໃນປີ 2005 ແລະ ພາຍໃນປີ 2010 ເຫັນວ່າຢູ່ໃນລະດັບດີທີ່ສຸດ. ຈໍານວນພະນັກງານຂອງ NDMO ໃນປະຈຸບັນຍັງຄົງເປັນບັນຫາລັກ ໄປຄຽງຄູ່ກັບຄວາມຈໍາກັດທາງດ້ານງົບປະມານເພື່ອປະຕິບັດວຽກງານ. ດັ່ງນັ້ນການຫັນປ່ຽນທັດສະນະ ຄະຕິຂອງລັດຖະບານໃນລະດັບສູນກາງກ່ຽວກັບການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ຮູບແບບວິທີ ການໃນການສ້າງໃຫ້ມີຄວາມພ້ອມຂອງສັງຄົມຕໍ່ໄພພິບັດໃຫ້ຫລາຍຂຶ້ນນັ້ນແມ່ນຈະຕ້ອງໄດ້ຖືກນໍາໃຊ້ຢູ່ຂັ້ນ ສູນກາງ, ແຂວງ ແລະ ຂັ້ນເມືອງ.

**ດຳລັດປະທານປະເທດ**

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ກົດໝາຍຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວວ່າດ້ວຍການຄຸ້ມຄອງໄພພິບັດ

**ໂດຍການພິຈາລະນາ**

a. ທີ່ວ່າ ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວຈະປະຕິບັດຄວາມຮັບຜິດຊອບເພື່ອປົກປ້ອງປະເທດຊາດໂດຍມີເປົ້າໝາຍທີ່ຈະໃຫ້ການປົກປ້ອງຊີວິດ ແລະ ການດຳລົງຊີວິດຂອງປະຊາຊົນຈາກໄພພິບັດຕ່າງ ໆ ເພື່ອໃຫ້ມີຄວາມປອດໄພ ແລະ ຄວາມສະຫງົບ ໂດຍອີງຕາມລັດຖະທຳມະນູນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ແຜນຍຸດທະສາດວ່າດ້ວຍການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ ເຖິງປີ 2020,ປີ 2010 ແລະ ແຜນປະຕິບັດງານໄລຍະ 2003 - 2005 (ເລກທີ 1139 / ກຊສສ, ລົງວັນທີ 18 ເມສາ 2003).

b. ໂດຍທີ່ວ່າເຂດນ້ຳແດນດິນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວມີສະພາບເງື່ອນໄຂທາງດ້ານພູມສັນຖານ, ລະບົບນິເວດ, ລະບົບອຸທົກກະສາດ, ແລະ ການຕັ້ງຖິ່ນຖານຂອງປະຊາກອນທີ່ມີຄວາມເປັນໄປໄດ້ທີ່ຈະເກີດໄພພິບັດຕ່າງ ໆ ອັນເນື່ອງມາຈາກປະເດັນທາງດ້ານທຳມະຊາດ ແລະ ປະເດັນຕ່າງ ໆ ທີ່ເກີດຈາກມະນຸດທີ່ພາໃຫ້ມີການສູນເສຍຊີວິດ, ການສ້າງຄວາມ

ເສຍຫາຍຕໍ່ສິ່ງແວດລ້ອມ, ການສູນເສຍວັດຖຸຊັບສິນທີ່ສ້າງອຸປະສັກຕໍ່ການພັດທະນາປະເທດຊາດ;

c. ໂດຍທີ່ວ່າການສະໜອງທາງດ້ານນິຕິກຳກ່ຽວກັບການຄຸ້ມຄອງໄພພິບັດໃນປະຈຸບັນຍັງບໍ່ທັນສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຢ່າງຫລວງຫລາຍ ແລະ ຄົບຖ້ວນທາງດ້ານກົດໝາຍ ແລະ ຍັງບໍ່ທັນສອດຄ່ອງກັບການພັດທະນາທາງດ້ານສັງຄົມໃນຍຸກສະໄໝຫລ້າສຸດ ແລະ ອີງໃສ່ຄວາມຕ້ອງການຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນການປ້ອງກັນໄພພິບັດທີ່ມີແຜນການເປັນຢ່າງດີ, ມີການປະສານງານ ແລະ ປະສົມປະສານເຂົ້າກັບບັນດາຄວາມພະຍາຍາມໃນການຄຸ້ມຄອງໄພພິບັດ;

d. ໂດຍອີງໃສ່ບັນດາຂໍ້ພິຈາລະນາດັ່ງທີ່ໄດ້ມີໄວ້ຢູ່ໃນວັກ a, ວັກ b ແລະ ວັກ c ຈຶ່ງເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງອະນຸມັດຜ່ານກົດໝາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງໄພພິບັດ;

**ໂດຍອີງໃສ່:** ດຳລັດຂອງນາຍົກລັດຖະມົນຕີເລກທີ 158 ລົງວັນທີ 23 ສິງຫາ 1999 ວ່າດ້ວຍການສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດຂອງ ສປປ ລາວ; ມະຕິຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມວ່າດ້ວຍການກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ NDMC ເລກທີ 097 / ກຮສສ ລົງວັນທີ 30 ມິຖຸນາ 2000; ດຳລັດຂອງສຳນັກງານນາຍົກລັດຖະມົນຕີເລກທີ 377 ລົງວັນທີ 9 ທັນວາ 2005 ວ່າດ້ວຍການສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ (CDC).

ໂດຍອີງຕາມການເຫັນດີຮ່ວມກັນຂອງສະພາແຫ່ງຊາດ ແລະ ປະທານປະເທດແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ດັ່ງນັ້ນຈຶ່ງໄດ້ຕົກລົງ:

ເຫັນດີອອກ: ກົດໝາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງໄພພິບັດ

**ໝວດທີ I**

**ຂໍ້ບັນຍັດທົ່ວໄປ**

**ມາດຕາ 1**

ຢູ່ໃນກົດໝາຍສະບັບນີ້:

1. ***ໄພພິບັດ*** ໝາຍເຖິງການພັງທະລາຍຂອງສະພາບການຄົງຢູ່ຂອງຊຸມຊົນໃດໜຶ່ງ ຫລື ສັງຄົມໃດໜຶ່ງທີ່ພາໃຫ້ແຜ່ກະຈາຍຄວາມເສຍຫາຍດ້ານມະນຸດ, ວັດຖຸສິ່ງຂອງເສດຖະກິດ ຫລື ສິ່ງແວດລ້ອມທີ່ຢູ່ເໜືອຄວາມສາມາດຂອງຊຸມຊົນ ຫລື ສັງຄົມທີ່ໄດ້ຖືກຜົນກະທົບທີ່ຈະແກ້ໄຂບັນຫາໂດຍນຳໃຊ້ຊັບພະຍາກອນຂອງຕົນເອງ.

*2.* ***ໄພອັນຕະລາຍ*** ໝາຍເຖິງເຫດການທີ່ມີຄວາມເປັນໄປໄດ້ໃນການເກີດຄວາມເສຍຫາຍທາງວັດຖຸ, ສະພາບການ ຫລື ກິດຈະກຳຂອງມະນຸດ ທີ່ອາດພາໃຫ້ມີການສູນເສຍຊີວິດ ຫລື ເກີດບາດເຈັບ, ເສຍຫາຍທາງຊັບສິນ, ການພັງທະລາຍຂອງສັງຄົມ ແລະ ເສດຖະກິດ ຫລື ການເຊື່ອມເສຍທາງດ້ານສິ່ງແວດລ້ອມ. *ສິ່ງອັນຕະລາຍທາງທຳມະຊາດປະກອບດ້ວຍນ້ຳຖ້ວມ, ລົມພະຍຸ, ແຜ່ນດິນໄຫວ, ພະຍຸປັ່ນປ່ວນ, ພະຍຸໂທນາໂດ, ໄພແຫ້ງແລ້ງ, ດິນເຈື່ອນ ຫລື ເຫດການທາງທຳມະຊາດອື່ນ ໆ ແລະ ສິ່ງອັນຕະລາຍທີ່ ເກີດຈາກມະນຸດລວມທັງການຮົ່ວໄຫລຂອງເຄມີ, ໄຟໄໝ້ ຫລື ອາຍແກັດຮົ່ວໄຫລ, ສິ່ງອັນຕະລາຍທາງຊີວະວິທະຍາ* ຊຶ່ງອາດລວມທັງ SARS, ໄຂ້ຫວັດນົກ, ການເຕົ້າໂຮມຂອງພະຍາດ, ການແຜ່ເຊື້ອພະຍາດ ຫລື *ສິ່ງອັນຕະລາຍທາງເຕັກໂນໂລຢີ* ໃນຮູບແບບທີ່ເກີດຈາກຄວາມຜິດພາດ ຫລື ການເພພັງຂອງລະບົບການບໍລິການທີ່ສຳຄັນໃດໜຶ່ງ ຫລື ໂຄງລ່າງພື້ນຖານໃດໜຶ່ງ.

3. ***ຄວາມສ່ຽງ:*** ໝາຍເຖິງຄວາມເປັນໄປໄດ້ຂອງສິ່ງທີ່ຕາມມາທີ່ເປັນອັນຕະລາຍ, ຫລື ຄວາມເສຍຫາຍຕ່າງ ໆທີ່ຄາດຄິດໄວ້ (ຄວາມຕາຍ, ການຖືກບາດເຈັບ, ການສູນເສຍຊັບສິນ, ການສູນເສຍຮູບແບບການດຳລົງຊີວິດ, ກິດຈະກຳທາງເສດຖະກິດທີ່ຖືກເພພັງ ຫລື ສິ່ງແວດລ້ອມທີ່ຖືກທຳລາຍ) ຊຶ່ງພາໃຫ້ເກີດມີສິ່ງອັນຕະລາຍເກີດຂຶ້ນລະຫວ່າງທຳມະຊາດ ແລະ ການກະທຳຂອງມະນຸດ ແລະ ເກີດມີສະພາບການທີ່ມີຄວາມສ່ຽງ.

*4.* ***ການຄຸ້ມຄອງຄວາມສ່ຽງໄພພິບັດ:*** ໝາຍເຖິງຂະບວນການທີ່ເປັນລະບົບໃນການນຳໃຊ້ການຕັດສິນບັນຫາທາງດ້ານບໍລິຫານ, ການນຳໃຊ້ອົງການຈັດຕັ້ງ, ທັກສະໃນດ້ານການປະຕິບັດງານ ແລະ ຄວາມ

ສາມາດຕ່າງ ໆ ໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ຄວາມສາມາດໃນການຕອບຮັບຂອງສັງຄົມ ແລະ ຊຸມຊົນເພື່ອຫລຸດຜ່ອນຄວາມສ່ຽງຂອງສິ່ງອັນຕະລາຍຈາກທຳມະຊາດ ແລະ ໄພພິບັດທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ເຕັກໂນໂລຢີ. ໃນນີ້ປະກອບດ້ວຍທຸກຮູບແບບຂອງກິດຈະກຳຊຶ່ງລວມທັງບັນດາມາດຕະການທີ່ມີໂຄງຮ່າງ ແລະ ບໍ່ມີໂຄງຮ່າງເພື່ອຫລຸດຜ່ອນ (ປ້ອງກັນ) ຫລື ຈຳກັດ (ຫລຸດຜ່ອນ ແລະ ກຽມພ້ອມ ພ້ອມ) ຜົນກະທົບໃນທາງບໍ່ດີຂອງສິ່ງອັນຕະລາຍຕ່າງ ໆ.

*5.* ***ການຫລຸດຜ່ອນຄວາມສ່ຽງໄພພິບັດ:*** ການຫລຸດຜ່ອນຄວາມສ່ຽງໄພພິບັດສາມາດຖືກກຳນົດວ່າແມ່ນ "ການປະຕິບັດການດ້ານຕ່າງ ໆ ເພື່ອຫລຸດຜ່ອນຄວາມສ່ຽງຂອງໄພພິບັດ ແລະ ຜົນກະທົບໃນທາງບໍ່ດີຂອງສິ່ງອັນຕະລາຍຈາກທຳມະຊາດໂດຍນຳໃຊ້ຄວາມພະຍາຍາມຢ່າງເປັນລະບົບເພື່ອວິເຄາະ ແລະ ຄຸ້ມຄອງສາເຫດຂອງໄພພິບັດໃນນັ້ນລວມທັງການຫລີກເວັ້ນສິ່ງອັນຕະລາຍ, ການຫລຸດຜ່ອນຄວາມສ່ຽງທາງສັງຄົມ ແລະ ເສດຖະກິດທີ່ເກີດຈາກສິ່ງອັນຕະລາຍ, ແລະ ການປັບປຸງການສ້າງຄວາມພ້ອມຕໍ່ບັນດາເຫດການທີ່ສົ່ງຜົນກະທົບບໍ່ດີ". ດັ່ງນັ້ນມັນຈຶ່ງແມ່ນການດັດປັບວິທີການເພື່ອຊ່ວຍຮັບມືກັບບັນດາຄວາມສ່ຽງທີ່ເພີ່ມຂຶ້ນຊຶ່ງເກີດຈາກການປ່ຽນແປງດິນຟ້າອາກາດ.

*6.* ***ແຜນການຫລຸດຜ່ອນຄວາມສ່ຽງໄພພິບັດ:*** ແມ່ນເອກະສານທີ່ກຳນົດນະໂຍບາຍ ແລະ ບັນດາຂໍ້ສະເໜີສຳລັບການຫລຸດຜ່ອນຄວາມສ່ຽງໄພພິບັດຂອງບັນດາເຈົ້າໜ້າທີ່ ທີ່ເຮັດການວາງແຜນຊຶ່ງຄວນພິຈາລະນາໃນການສ້າງແຜນການ ແລະ ກຳນົດວຽກງານທີ່ຈະເຮັດ. ເນື່ອງຈາກມີຄວາມແຕກຕ່າງທາງດ້ານພູມສາດຢູ່ຫລາຍລະດັບ, ດັ່ງນັ້ນແຜນການຫລຸດຜ່ອນຄວາມສ່ຽງໄພພິບັດຈຶ່ງມີຄວາມສະເພາະເຈາະຈົງສຳລັບລັດຖະບານໃນແຕ່ລະລະດັບ.

*7.* ***ການຫລຸດຜ່ອນ:*** ແມ່ນບັນດາມາດຕະການທີ່ມີໂຄງສ້າງ ແລະ ບໍ່ມີໂຄງສ້າງທີ່ໄດ້ຖືກປະຕິບັດເພື່ອຫລຸດຜ່ອນຜົນກະທົບອັນບໍ່ດີຈາກສິ່ງອັນຕະລາຍທາງທຳມະຊາດ, ການເຊື່ອມໂຊມຂອງສິ່ງແວດລ້ອມ ແລະ ສິ່ງອັນຕະລາຍທາງເຕັກໂນໂລຢີ. (ຕົວຢ່າງ ມາດຕະການທີ່ມີໂຄງສ້າງແມ່ນວຽກງານວິສະວະກອນ ແລະ ວຽກງານການກໍ່ສ້າງທີ່ມີການປ້ອງກັນສິ່ງອັນຕະລາຍ, ໃນຄະນະທີ່ບັນດາມາດຕະການທີ່ບໍ່ມີໂຄງສ້າງປະກອບດ້ວຍການສ້າງຈິດສຳນຶກ, ການພັດທະນາຄວາມຮູ້, ນະໂຍບາຍກ່ຽວກັບການນຳໃຊ້ດິນ ແລະ ການຄຸ້ມຄອງຊັບພະຍາກອນ, ແລະ ຮູບແບບການປະຕິບັດຂອງສິ່ງອຳນວຍຄວາມສະດວກຕ່າງ ໆ.

*8.   ການເຕືອນໄພລ່ວງໜ້າ:* ແມ່ນສິ່ງທີ່ເຂົ້າໃຈກັນວ່າແມ່ນການເຕືອນໄພລ່ວງໜ້າຂອງການເກີດສິ່ງອັນຕະລາຍທາງທຳມະຊາດ / ທາງເຕັກໂນໂລຢີ.
*9.   ການບັນເທົາທຸກ / ການຕອບໂຕ້:* ແມ່ນການສະໜອງການຊ່ວຍເຫລືອ ຫລື ການເຂົ້າແຊກແຊງໃນໄລຍະທີ່ພົບເກີດ ຫລື ໄລຍະສັ້ນ ໆ ພາຍຫລັງທີ່ເກີດໄພພິບັດເພື່ອຊ່ວຍກອບກູ້ຊີວິດ ແລະ ໃຫ້ການຊ່ວຍເຫລືອດ້ານຄວາມຕ້ອງການພື້ນຖານເພື່ອກຸ້ມຕົນເອງສຳລັບບັນດາປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ.   ມັນອາດເປັນໄລຍະເວລາແບບກະທັນຫັນ, ໄລຍະສັ້ນ, ຫລື ໄລຍະຍາວ.

*10.   ການປົວແປງຄືນໃໝ່ / ຟື້ນຟູ:* ແມ່ນການຕົກລົງ ແລະ ການປະຕິບັດວຽກງານຕ່າງ ໆ ພາຍຫລັງເກີດໄພພິບັດໃດໜຶ່ງໂດຍມີຈຸດປະສົງເພື່ອຟື້ນຟູຄືນ ຫລື ປັບປຸງເງື່ອນໄຂການດຳລົງຊີວິດກ່ອນການເກີດໄພພິບັດຂອງຊຸມຊົນທີ່ມີຄວາມສ່ຽງໃດໜຶ່ງໂດຍມີການຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການເຮັດການປ່ຽນແປງຕ່າງ ໆທີ່ຈຳເປັນເພື່ອຫລຸດຜ່ອນຄວາມສ່ຽງຈາກໄພພິບັດ.

*11.   ຄວາມພ້ອມທີ່ມີພາຍໃນຕົວ:* ແມ່ນຄວາມສາມາດຂອງລະບົບໃດໜຶ່ງ, ຂອງຊຸມຊົນ ຫລື ສັງຄົມໃດໜຶ່ງທີ່ມີຄວາມເປັນໄປໄດ້ທີ່ຈະປະເຊີນໜ້າກັບສິ່ງອັນຕະລາຍເພື່ອສາມາດປັບຕົວໃນການຕໍ່ຕ້ານຄືນ ຫລື ປ່ຽນແປງຕົນເອງເພື່ອໃຫ້ບັນລຸ ແລະ ຮັກສາລະດັບໃດໜຶ່ງຂອງການປະຕິບັດວຽກງານ ແລະ ຂອງໂຄງສ້າງໃດໜຶ່ງ.   ສິ່ງນີ້ໄດ້ຖືກກຳນົດຕາມລະດັບທີ່ລະບົບທາງສັງຄົມວ່າມີຄວາມສາມາດຄືແນວໃດໃນການຈັດຕັ້ງຕົນເອງເພື່ອເພີ່ມຄວາມສາມາດຂອງຕົນໃນການຮຽນຮູ້ຈາກບັນດາໄພພິບັດທີ່ເກີດຂຶ້ນໃນອະດີດຜ່ານມາເພື່ອເຮັດການປ້ອງກັນໃນອະນາຄົດໃຫ້ດີຂຶ້ນ ແລະ ປັບປຸງບັນດາມາດຕະການຫລຸດຜ່ອນຄວາມສ່ຽງ.

*12.   ການສ້າງຄວາມສາມາດ:* ແມ່ນຄວາມພະຍາຍາມເພື່ອພັດທະນາທັກສະຂອງມະນຸດ ຫລື ພັດທະນາພື້ນຖານໂຄງຮ່າງທາງສັງຄົມຢູ່ພາຍໃນຊຸມຊົນ ຫລື ອົງການຈັດຕັ້ງໃດໜຶ່ງຊຶ່ງມີຄວາມຈຳເປັນເພື່ອຫລຸດຜ່ອນລະດັບຄວາມສ່ຽງ.   ການສ້າງຄວາມສາມາດຍັງປະກອບດ້ວຍການພັດທະນາສະຖາບັນ, ການເງິນ, ການເມືອງ ແລະ ຊັບພະຍາກອນດ້ານອື່ນ ໆ ເປັນຕົ້ນແມ່ນເຕັກໂນໂລຢີຢູ່ຫລາຍລະດັບ ແລະ ຫລາຍຂະແໜງການຂອງສັງຄົມ.

***13. ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ:*** ແມ່ນການປັບຕົວທີ່ໄດ້ຖືກກຳນົດໂດຍ IPCC ວ່າມັນແມ່ນ "ການດັດປັບຢູ່ໃນທຳມະຊາດ ຫລື ລະບົບຂອງມະນຸດໃນການຕອບໂຕ້ກັບສະພາບການປ່ຽນແປງໃນຕົວຈິງ ຫລື ຕາມການຄາດຄະເນຂອງດິນຟ້າອາກາດ ຫລື ບັນດາຜົນກະທົບທີ່ຈະເກີດຂຶ້ນທີ່ຈະເກີດໃຫ້ມີສິ່ງອັນຕະລາຍ ຫລື ທຳລາຍບັນດາໂອກາດທີ່ມີຜົນປະໂຫຍດ.

***14. ຊຸມຊົນ:*** ແມ່ນກຸ່ມຂອງສັງຄົມທີ່ມີຄະນະໃດໜຶ່ງຊຶ່ງສະມາຊິກຂອງກຸ່ມດັ່ງກ່າວມີທີ່ຢູ່ອາໃສ່ຢູ່ໃນທ້ອງຖິ່ນສະເພາະໃດໜຶ່ງ, ຂຶ້ນກັບການປົກຄອງອັນດຽວກັນ ແລະ ໂດຍປົກກະຕິມັກຈະມີວັດທະນະທຳ ແລະ ມູນມໍລະດົກທາງປະຫວັດສາດອັນດຽວກັນ.

***15. ສະພາບສຸກເສີນ:*** ແມ່ນສະພາບການໃດໜຶ່ງທີ່ມີຄວາມສ່ຽງໂດຍທັນທີ່ຕໍ່ສຸຂະພາບ, ຊີວິດ, ຊັບສິນ ຫລື ສິ່ງແວດລ້ອມ. ສະພາບສຸກເສີນສ່ວນຫລາຍແມ່ນຮຽກຮ້ອງໃຫ້ມີການເຂົ້າແຊກແຊງຢ່າງຮີບດ່ວນເພື່ອປ້ອງກັນສະພາບທີ່ຈະຮ້າຍແຮງຂຶ້ນ, ເຖິງແມ່ນວ່າໃນບາງສະພາບການ ການຫລຸດຜ່ອນຄວາມສ່ຽງອາດບໍ່ມີຄວາມຈຳເປັນຕ້ອງໄດ້ເຮັດ ແລະ ບັນດາສຳນັກງານຕ່າງ ໆ ອາດມີຄວາມສາມາດພຽງແຕ່ໃຫ້ການຊ່ວຍເຫລືອສຳລັບການດູແລເບື້ອງຕົ້ນພາຍຫລັງທີ່ເຫດການໄພພິບັດໄດ້ເກີດຂຶ້ນ. ໃນຄະນະທີ່ສະພາບສຸກເສີນບາງຢ່າງສາມາດສະແດງອອກໃນຕົວມັນເອງ (ເປັນຕົ້ນແມ່ນໄພພິບັດທາງທຳມະຊາດທີ່ຂົ່ມຂູ່ຫລາຍຊີວິດ) ຫລາຍເຫດການທີ່ມີຂະໜາດນ້ອຍແມ່ນຮຽກຮ້ອງໃຫ້ມີການປະກອບຄຳຄິດເຫັນຂອງຜູ້ສັງເກດການ (ຫລື ພາກສ່ວນທີ່ໄດ້ຮັບຜົນກະທົບ) ເພື່ອຕົກລົງນຳກັນວ່າເຫດການນັ້ນ ໆ ສາມາດເອີ້ນໄດ້ວ່າມັນແມ່ນສະພາບສຸກເສີນ ຫລື.

***16. ການເຊື່ອມສານບົດບາດຍິງຊາຍ:*** ການເຊື່ອມສານບົດບາດຍິງຊາຍແມ່ນຂະບວນການໃນການປະເມີນຜົນກະທົບຕໍ່ແມ່ຍິງ ແລະ ຜູ້ຊາຍຈາກການປະຕິບັດການທີ່ມີການວາງແຜນໃດໜຶ່ງໃນນັ້ນລວມທັງດ້ານນິຕິກຳ, ນະໂຍບາຍ ຫລື ແຜນງານຕ່າງ ໆ ໃນທຸກຂົງເຂດ ແລະ ທຸກລະດັບ. ມັນແມ່ນຍຸດທະສາດອັນໜຶ່ງສຳລັບການຮັບເອົາບັນຫາ ແລະ ປະສົບການຕ່າງ ໆ ຂອງແມ່ຍິງ ແລະ ຜູ້ຊາຍເຂົ້າຢູ່ໃນວຽກງານໃນການອອກແບບ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນນະໂຍບາຍ ແລະ ແຜນງານຕ່າງ ໆທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມເພື່ອເຮັດໃຫ້ແມ່ຍິງ ແລະ ຜູ້ຊາຍໄດ້ຮັບຜົນປະ

ໂຫຍດເທົ່າທຽມກັນ ແລະ ມີຄວາມສະເໝີພາບ. ເປົ້າໝາຍອັນສຸດທ້າຍກໍ່ຄື ເພື່ອບັນລຸຄວາມສະເໝີພາບລະຫວ່າງຍິງຊາຍ.

*17.* ***ສິ່ງອັນຕະລາຍ:*** ໝາຍເຖິງເຫດການໃດໜຶ່ງທາງວັດຖຸ, ສະພາບການ ຫລື ກິດຈະກໍາຂອງມະນຸດທີ່ອາດພາໃຫ້ເກີດມີຄວາມເສຍຫາຍທີ່ອາດເປັນສາເຫດຂອງການສູນເສຍຊີວິດ ຫລື ເກີດການບາດເຈັບ, ການເສຍຫາຍທາງຊັບສິນ, ການເພພັງຂອງລະບົບສັງຄົມ ແລະ ເສດຖະກິດ ຫລື ການເຊື່ອມໂຊມທາງດ້ານສິ່ງແວດລ້ອມ.

*18.* ***ຮູບແບບການປະຕິບັດລະດັບຊາດເພື່ອຫລຸດຜ່ອນຄວາມສ່ຽງໄພພິບັດ:*** ໝາຍເຖິງເວທີນໍາໜ້າ ຫລື ຄະນະກໍາມະການລະດັບຊາດທີ່ປະກອບດ້ວຍຫລາຍພາກສ່ວນ. ເວທີດັ່ງກ່າວນີ້ປະຕິບັດໜ້າທີ່ເປັນຜູ້ປຸກລະດົມສົ່ງເສີມໃຫ້ມີການຫລຸດຜ່ອນຄວາມສ່ຽງຈາກໄພພິບັດຢູ່ທຸກລະດັບ ແລະ ເຮັດການປະສານງານ, ການວິເຄາະ ແລະ ໃຫ້ຄໍາແນະນໍາກ່ຽວກັບຂົງເຂດວຽກງານທີ່ເປັນບຸລິມະສິດທີ່ຮຽກຮ້ອງໃຫ້ມີການປະຕິບັດງານຮ່ວມກັນໂດຍຜ່ານຂະບວນການທີ່ມີການປະສານງານ ແລະ ມີສ່ວນຮ່ວມ. ເວທີລະດັບຊາດສໍາລັບການຫລຸດຜ່ອນຄວາມສ່ຽງໄພພິບັດຄວນແມ່ນກົນໄກການປະສານງານສໍາລັບການເຊື່ອມສານເອົາວຽກງານຫລຸດຜ່ອນຄວາມສ່ຽງໄພພິບັດເຂົ້າໃນການກໍານົດນະໂຍບາຍ, ການວາງແຜນ ແລະ ການສ້າງແຜນງານຕ່າງ ໆໂດຍໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດ HFA. ເວທີດັ່ງກ່າວຄວນມີເປົ້າໝາຍເພື່ອປະກອບສ່ວນໃຫ້ແກ່ການສ້າງຕັ້ງ ແລະ ພັດທະນາລະບົບການຫລຸດຜ່ອນຄວາມສ່ຽງໄພພິບັດລະດັບຊາດໂດຍອີງຕາມຄວາມເໝາະສົມແຕ່ລະປະເທດ.

*19.* ***ກອບວຽກທາງດ້ານນະໂຍບາຍລະດັບຊາດ:*** ໝາຍເຖິງບັນດານະໂຍບາຍທີ່ໄດ້ຖືກຮັບຮອງເອົາໂດຍເຈົ້າໜ້າທີ່ໃດໜຶ່ງໃນລະດັບຊາດເພື່ອກໍານົດ ແລະ ແກ້ໄຂບັນຫາສະເພາະໃດໜຶ່ງ ແລະ ເພື່ອຊີ້ນໍາການຕັດສິນບັນຫາໂດຍທີ່ວ່ານະໂຍບາຍເຫລົ່ານີ້ປະກອບດ້ວຍການປະເມີນບັນດາເຫດການທີ່ກ່ຽວຂ້ອງ, ຍຸດທະສາດ, ເປົ້າໝາຍ, ວິທີການປະຕິບັດ, ຫລັກການ, ແຜນການ, ກິດຈະກໍາ, ບຸລິມະສິດ, ພາກສ່ວນກ່ຽວຂ້ອງ ແລະ ຄວາມຮັບຜິດຊອບ. ກອບວຽກນະໂຍບາຍໃນການຫລຸດຜ່ອນຄວາມສ່ຽງໄພພິບັດລະດັບຊາດໃດໜຶ່ງສາມາດໃຫ້ການຊີ້ນໍາທຸກພາກສ່ວນກ່ຽວຂ້ອງ - ບັນດາສໍານັກງານທີ່ຕາງໜ້າຂະແໜງການ

ຕ່າງ ໆ, ພາກສ່ວນລັດຖະບານໃນທ້ອງຖິ່ນ ແລະ ພາກສ່ວນອື່ນ ໆ ໃນການພັດທະນານະໂຍບາຍການຫລຸດຜ່ອນຄວາມສ່ຽງທີ່ມີການພົວພັນຊຶ່ງກັນ ແລະ ກັນຢູ່ພາຍໃນຂອບເຂດສິດອຳນາດຂອງເຂົາເຈົ້າ.

***20. ຄວາມພ້ອມ:*** ໝາຍເຖິງບັນດາກິດຈະກຳກ່ອນເກີດໄພພິບັດທີ່ອາດຖືກຈັດຕັ້ງປະຕິບັດຢູ່ພາຍໃນຂອບເຂດການຄຸ້ມຄອງຄວາມສ່ຽງໄພພິບັດ ແລະ ອີງໃສ່ການວິເຄາະຄວາມສ່ຽງຢ່າງລະອຽດ. ວຽກນີ້ປະກອບດ້ວຍການພັດທະນາ ຫລື ການສຸກຍູ້ສົ່ງເສີມໃຫ້ມີຍຸດທະສາດການສ້າງຄວາມພ້ອມໂດຍລວມ, ນະໂຍບາຍ, ໂຄງສ້າງທາງສະຖາບັນ, ຄວາມສາມາດໃນການເຕືອນ ແລະ ຄາດຄະເນລ່ວງໜ້າ ແລະ ການວາງແຜນທີ່ມີການກຳນົດມາດຕະການຕ່າງ ໆ ເພື່ອຊ່ວຍບັນດາຊຸມຊົນທີ່ມີຄວາມສ່ຽງໃນການເຝົ້າລະວັງຊີວິດ ແລະ ຊັບສິນຂອງພວກເຂົາໂດຍການຕື່ນຕົວຕໍ່ສະພາບອັນຕະລາຍຕ່າງ ໆ ແລະ ປະຕິບັດຢ່າງເໝາະສົມໂດຍອີງຕາມສະພາບການຂົ່ມຂູ່ ຫລື ໄພພິບັດທີ່ເກີດຂຶ້ນຕົວຈິ່ງ.

***21. ການປ້ອງກັນ:*** ໝາຍເຖິງກິດຈະກຳຕ່າງ ເພື່ອຫລີກເວັ້ນຜົນກະທົບອັນບໍ່ດີຈາກສິ່ງອັນຕະລາຍ ແລະໃຊ້ວິທີການຕ່າງ ໆ ເພື່ອຫລຸດຜ່ອນໄພພິບັດທີ່ກ່ຽວຂ້ອງກັບສິ່ງແວດລ້ອມເຕັກໂນໂລຢີ ແລະ ຊີວະວິທະຍາ. ໂດຍຂຶ້ນກັບຄວາມເປັນໄປໄດ້ທາງດ້ານສັງຄົມ ແລະ ເຕັກນິກ ແລະ ການພິຈາລະນາຄ່າໃຊ້ຈ່າຍ ແລະ ຜົນໄດ້ຮັບ, ການລົງທຶນໃສ່ບັນດາມາດຕະການປ້ອງກັນແມ່ນຂຶ້ນກັບສະພາບຄວາມເປັນຈິງຂອງໄພພິບັດທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ. ໃນດ້ານການສ້າງຈິດສຳນຶກ ແລະ ການໃຫ້ຄວາມຮູ້ທີ່ກ່ຽວຂ້ອງກັບການຫລຸດຜ່ອນຄວາມສ່ຽງໄພພິບັດ ການປ່ຽນແປງທັດສະນະຄະຕິ ແລະ ການປະພຶດຈະເປັນການປະກອບສ່ວນເຂົ້າໃນການສົ່ງເສີມ “ການປ້ອງກັນແບບເປັນປະເພນີ”.

***22. ການສ້າງຈິດສຳນຶກຂອງສາທາລະນະຊົນ:*** ແມ່ນບັນດາຂະບວນການຂອງການແຈ້ງການຂໍ້ມູນໃຫ້ແກ່ປະຊາກອນທົ່ວໄປ, ການເພີ່ມລະດັບຄວາມຕື່ນຕົວກ່ຽວກັບຄວາມສ່ຽງ ແລະ ວິທີການທີ່ປະຊາຊົນສາມາດປະຕິບັດໄດ້ເພື່ອຫລຸດຜ່ອນສິ່ງອັນຕະລາຍຕໍ່ພວກເຂົາ. ສິ່ງນີ້ມີຄວາມສຳຄັນເປັນຢ່າງຍິ່ງສຳລັບບັນດາເຈົ້າໜ້າທີ່ຂອງລັດໃນການປະຕິບັດໜ້າທີ່ຮັບຜິດຊອບຂອງພວກເຂົາເພື່ອຊ່ວຍຊີວິດ ແລະ ຮັກສາຊັບສິນໃນກໍລະນີທີ່ເກີດໄພພິບັດ. ການປຸກຈິດສຳນຶກຂອງສາທາລະນະຊົນເປັນການສົ່ງເສີມການປ່ຽນແປງໃນດ້ານການປະພຶດເພື່ອນຳໄປສູ່ການສ້າງໃຫ້ມີວັດທະນາທຳໃນການຫລຸດຜ່ອນຄວາມສ່ຽງ. ວຽກນີ້ປະກອບດ້ວຍການໂຄສະນາຕໍ່ປະຊາຊົນ, ການເຜີຍແຜ່, ການໃຫ້ຄວາມຮູ້, ການກະຈາຍຂໍ້ມູນຜ່ານວິທະຍຸ ແລະ

ໂທລະພາບ ແລະ ການໃຊ້ສິ່ງພິມຕ່າງ ໆ ຕະຫລອດເຖິງການສ້າງໃຫ້ມີສູນ ແລະ ເຄືອຄ່າຍຂໍ້ມູນຂ່າວສານ ແລະ ການປະຕິບັດງານ ແລະ ການມີສ່ວນຮ່ວມຂອງຊຸມຊົນ.

*23.* ***ຄວາມສາມາດຕອບໂຕ້:*** ແມ່ນຄວາມສາມາດຂອງລະບົບໃດໜຶ່ງ, ຂອງຊຸມຊົນ ຫລື ສັງຄົມໃດໜຶ່ງທີ່ມີຄວາມເປັນໄປໄດ້ທີ່ຈະປະເຊີນໜ້າກັບສິ່ງອັນຕະລາຍເພື່ອສາມາດປັບຕົວໃນການຕໍ່ຕ້ານຄືນ ຫລື ປ່ຽນແປງຕົນເອງເພື່ອໃຫ້ບັນລຸ ແລະ ຮັກສາລະດັບໃດໜຶ່ງຂອງການປະຕິບັດວຽກງານ ແລະ ຂອງໂຄງສ້າງໃດໜຶ່ງ. ສິ່ງນີ້ໄດ້ຖືກກຳນົດຕາມລະດັບທີ່ລະບົບທາງສັງຄົມວ່າມີຄວາມສາມາດຄືແນວໃດໃນການຈັດຕັ້ງຕົນເອງເພື່ອເພີ່ມຄວາມສາມາດຂອງຕົນໃນການຮຽນຮູ້ຈາກບັນດາໄພພິບັດທີ່ເກີດຂຶ້ນໃນອະດີດຜ່ານມາເພື່ອເຮັດການປ້ອງກັນໃນອະນາຄົດໃຫ້ດີຂຶ້ນ ແລະ ປັບປຸງບັນດາມາດຕະການຫລຸດຜ່ອນຄວາມສ່ຽງ.

*24.* ***ສະພາບຄວາມສ່ຽງ:*** ແມ່ນການວັດແທກບັນດາອົງປະກອບຂອງຊຸມຊົນທີ່ຢູ່ໃນສະພາບຄວາມສ່ຽງຕໍ່ສິ່ງອັນຕະລາຍສະເພາະຕ່າງ ໆ, ບໍ່ວ່າຈະເປັນສິ່ງອັນຕະລາຍທີ່ເກີດຈາກທຳມະຊາດ ແລະ ເກີດຈາກມະນຸດກໍ່ຕາມທີ່ຊຸມຊົນມີຄວາມສາມາດຕອບໂຕ້ໃນລະດັບຕ່ຳຕໍ່ກັບບັນດາຜົນກະທົບຂອງສິ່ງອັນຕະລາຍ ຫລື ຄຸນລັກສະນະຕ່າງ ໆ ຂອງສິ່ງອັນຕະລາຍນັ້ນທີ່ເປັນການຂົ່ມຂູ່ຫລາຍຊີວິດ, ຫລາຍເຫດການຂະໜາດນ້ອຍແມ່ນຮຽກຮ້ອງໃຫ້ມີຄຳຄິດເຫັນຢ່າງພຽງພໍຂອງຜູ້ສັງເກດການ (ຫລື ພາກສ່ວນທີ່ໄດ້ຮັບຜົນກະທົບ) ເພື່ອຕັດສິນວ່າສະພາບການນັ້ນຈະຕົກຢູ່ໃນສະພາບສຸກເສີນ ຫລື ບໍ່.

*25.* ***ຄົນທີ່ຖືກຍົກຍ້າຍ:*** ອາດໝາຍເຖິງປະຊາຊົນ ຫລື ກຸ່ມຄົນທີ່ໄດ້ຖືກບີບບັງຄັບໃຫ້ຍົກຍ້າຍບ່ອນພັກເຊົາຂອງພວກເຂົາພາຍໃນ ສປປ ລາວສຳລັບໄລຍະເວລາທີ່ບໍ່ມີການກຳນົດອັນເນື່ອງມາຈາກຜົນກະທົບໃນທາງບໍ່ດີຈາກເຫດການໄພພິບັດທາງທຳມະຊາດ ຫລື ເກີດຈາກມະນຸດ.

*26.* ***ຜູ້ອົບພະຍົບ:*** ໝາຍເຖິງບຸກຄົນຕ້ອງໄດ້ຍົກຍ້າຍຂ້າມແດນໄປປະເທດອື່ນເພື່ອຂໍການພັກເຊົາອັນເນື່ອງມາຈາກເຫດການໄພພິບັດທາງທຳມະຊາດ ຫລື ເກີດຈາກມະນຸດທີ່ພາໃຫ້ມີການຍົກຍ້າຍຖິ່ນຖານ.

**ພາກທີ II**

**ວ່າດ້ວຍພື້ນຖານ, ຫລັກການ ແລະ ຈຸດປະສົງ**

**ມາດຕາ 2**

ການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງອີງໃສ່ຈຸດປະສົງຂອງລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວເພື່ອ:

a. ສ້າງຄວາມປອດໄພໃຫ້ແກ່ການພັດທະນາແບບຍືນຍົງ ແລະ ຫລຸດຜ່ອນຄວາມເສຍຫາຍຈາກໄພພິບັດທາງທຳມະຊາດ ແລະ ເກີດຈາກມະນຸດຕໍ່ບັນດາຊຸມຊົນທີ່ຢູ່ໃນຄວາມສ່ຽງ. ຕໍ່ສັງຄົມ ແລະ ລະບົບເສດຖະກິດແຫ່ງຊາດ;

b. ຫັນປ່ຽນຍຸດທະສາດແຫ່ງຊາດຈາກການບັນເທົາທຸກ ແລະ ການຫລຸດຜ່ອນຄວາມສ່ຽງພາຍຫລັງຜົນກະທົບຈາກໄພພິບັດຕໍ່ຊຸມຊົນ, ສັງຄົມ ແລະ ເສດຖະກິດແຫ່ງຊາດໃຫ້ກາຍມາເປັນການສ້າງຄວາມພ້ອມກ່ອນທີ່ໄພພິບັດຈະເກີດຂື້ນ, ສຸມໃສ່ຜົນກະທົບທີ່ເກີດຈາກນ້ຳຖ້ວມ, ໄພແຫ້ງແລ້ງ, ດິນເຈື່ອນ ແລະ ໄຟໄໝ້ໄປຄຽງຄູ່ກັບການສືບຕໍ່ປົວແປງ ແລະ ຟື້ນຟູພາຍຫລັງໄລຍະເກີດໄພພິບັດ.

c. ຫັນປ່ຽນຈາກການປະຕິບັດຄວາມຮັບຜິດຊອບພຽງແຕ່ພາຍໃນຂອງສຳນັກງານສະເພາະໃຫ້ກາຍມາເປັນວິທີການທີ່ເອົາປະຊາຊົນເປັນຈຸດໃຈກາງໃນການສ້າງຄວາມສາມາດຢູ່ໃນລະດັບຊຸມຊົນໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດ.

d. ສົ່ງເສີມການປົກປ້ອງສະພາບແວດລ້ອມແບບຍືນຍົງ ແລະ ຊັບພະຍາກອນທຳມະຊາດ ເປັນຕົ້ນແມ່ນ ປ່າໄມ້, ດິນ ແລະ ນ້ຳ.

**ມາດຕາ 3**

(1) ການຄຸ້ມຄອງໄພພິບັດດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 2 ຈະຕ້ອງຖືກຈັດຕັ້ງປະຕິບັດພາຍໃຕ້ເງື່ອນໄຂທີ່ມີ:

a. ສັນຕິພາບ

b. ຄວາມເປັນເອກະລາດ

c. ປະຊາທິປະໄຕ

d. ເອກະພາບ

e. ວັດທະນາຖາວອນ

g. ການອະນຸລັກສິ່ງແວດລ້ອມ

h. ວິທະຍາສາດ ແລະ ເຕັກໂນໂລຢີ.

(2) ຫລັກການຄຸ້ມຄອງໄພພິບັດດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 2 ຈະຕ້ອງຖືກຈັດຕັ້ງປະຕິບັດບົນພື້ນຖານຫລັກການ:

a. ທັນເວລາ ແລະ ມີຄວາມສອດຄ່ອງ.

b. ມີປະສິດທິຜົນ ແລະ ມີປະສິດທິພາບ;

c. ມີຍຸດທະສາດ.

d. ມີຄວາມໂປ່ງໃສ່ ແລະ ມີຄວາມຮັບຜິດຊອບ;

e. ສ້າງຄວາມເຂັ້ມແຂງ;

f. ມີຄວາມຍືນຍົງ.

**ມາດຕາ 4**

ການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງບັນລຸບັນດາຈຸດປະສົງດັ່ງຕໍ່ໄປນີ້:

a. ປົກປ້ອງປະເທດຊາດຈາກຄວາມສ່ຽງໄພພິບັດທຳມະຊາດ ແລະ ເກີດຈາກມະນຸດ;

b. ສ້າງຄວາມກົມກຽວໃຫ້ແກ່ລະບົບນິຕິກຳທີ່ມີລະບົບການຄຸ້ມຄອງຄວາມສ່ຽງໄພພິບັດທາງທຳມະຊາດ;

c. ຮັບປະກັນໃຫ້ມີໂຄງສ້າງການຄຸ້ມຄອງຄວາມສ່ຽງທີ່ມີການວາງແຜນທີ່ດີ, ການເຊື່ອມສານ, ການປະສານງານ ແລະ ມີຄວາມລະອຽດ;

d. ເຄົາລົບວັດທະນາທຳຂອງແຕ່ລະທ້ອງຖິ່ນ;

e. ສົ່ງເສີມການມີສ່ວນຮ່ວມ ແລະ ການເປັນຄູ່ຮ່ວມງານຂອງພາກສ່ວນລັດ ແລະ ເອກະຊົນໃນການດຳເນີນກິດຈະກຳການຄຸ້ມຄອງຄວາມສ່ຽງໄພພິບັດ;

f. ສ້າງສັນຕິພາບຢູ່ໃນສັງຄົມ ແລະ ປະເທດຊາດ.

**ພາກ III**

**ຄວາມຮັບຜິດຊອບ ແລະ ສິດອຳນາດ**

**ມາດຕາ 5**

ລັດຖະບານຢູ່ລະດັບສູນກາງ ແລະ ລະດັບແຂວງຈະຕ້ອງມີຄວາມຮັບຜິດຊອບໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

**ມາດຕາ 6**

ຄວາມຮັບຜິດຊອບຂອງລັດຖະບານໃນການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງປະກອບດ້ວຍ:

a. ການຫລຸດຜ່ອນຄວາມສ່ຽງໄພພິບ◌ັດ ແລະ ການເຊື່ອມສານວຽກງານຫລຸດຜ່ອນຄວາມສ່ຽງເຂົ້າກັບແຜນງານພັດທະນາລະດັບຊາດ;

b. ການປົກປ້ອງບັນດາຊຸມຊົນກ່ຽວກັບຜົນກະທົບທີ່ເກີດຈາກໄພພິບັດ;

c. ການຟື້ນຟູຈາກຜົນກະທົບໄພພິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

d. ການຈັດສັນງົບປະມານສຳລັບການຄຸ້ມຄອງໄພພິບັດຢ່າງພຽງພໍຢູ່ໃນງົບປະມານລະດັບຊາດ ແລະ ດັບແຂວງ;

e. ການຈັດສັນງົບປະມານສຳລັບການຄຸ້ມຄອງໄພພິບັດຢູ່ໃນຮູບແບບກອງທຶນໄພພິບັດລະດັບຊາດ,

f. ການປົກປັກຮັກສາບັນດາອະນຸສະຖານ / ສິ່ງເຄົາລົບນັບຖືທາງປະຫວັດສາດໃຫ້ປອດໄພຈາກການຂົ່ມຂູ່ຂອງໄພພິບັດ.

**ມາດຕາ 7**

(1) ສິດອຳນາດຂອງລັດຖະບານໃນການຄຸ້ມຄອງຄວາມສ່ຽງໄພພິບັດຕ້ອງປະກອບດ້ວຍ:

a. ການກຳນົດນະໂຍບາຍຄຸ້ມຄອງໄພພິບັດທີ່ສອດຄ່ອງກັບນະໂຍບາຍການພັດທະນາລະດັບຊາດ;

b. ການວາງແຜນການພັດທະນາທີ່ປະກອບດ້ວຍບັນດາອົງປະກອບຂອງນະໂຍບາຍການຄຸ້ມຄອງຄວາມສ່ຽງໄພພິບັດ;

c. ການຕົກລົງເຫັນດີກ່ຽວກັບສະພາບການ ແລະ ລະດັບຂອງໄພພິບັດໃນລະດັບຊາດ ແລະ ລະດັບແຂວງ;

d. ທາງເລືອກທາງດ້ານນະໂຍບາຍສຳລັບການຮ່ວມມືກັບປະເທດອື່ນ ໆ, ບັນດາສຳນັກງານ ຫລືພາກສ່ວນສາກົນ ແລະ ການຄຸ້ມຄອງໄພພິບັດ;

e. ການກຳນົດນະໂຍບາຍ ແລະ ການນຳໃຊ້ເຕັກໂນໂລຢີຕໍ່ກັບການຂົ່ມຂູ່ຂອງໄພພິບັດ;

f. ການກຳນົດນະໂຍບາຍ ແລະ ການປ້ອງກັນໃນການຄວບຄຸມ ແລະ ການສູນເສຍຂອງຊັບພະຍາກອນທຳມະຊາດທີ່ຢູ່ນອກເໜືອຄວາມສາມາດໃນການຟື້ນຟູ;

g. ຄວາມໂປ່ງໃສ່ ແລະ ຄວາມຮັບຜິດຊອບຕໍ່ຊັບພະຍາກອນທີ່ໄດ້ຮັບການຊ່ວຍເຫລືອ ຫລື ໄດ້ມີການຈັດຊື້ເພື່ອນຳໃຊ້ເຂົ້າໃນການເຮັດກິດຈະກຳຕອບໂຕ້ໄພພິບັດໃນລະດັບຊາດ ແລະ ດັບແຂວງ.

(2) ການກຳນົດສະພາບການ ແລະ ລະດັບຂອງໄພພິບັດລະດັບຊາດ ແລະ ລະດັບທ້ອງຖິ່ນດັ່ງທີ່ໄດ້ກຳນົດໄວ້ຢູ່ໃນວັກ (1) ຢູ່ໃນຂໍ້ c ຈະຕ້ອງປະກອບດ້ວຍຕົວຊີວັດດັ່ງຕໍ່ໄປນີ້:

a. ຈຳນວນຂອງປະຊາຊົນທີ່ຖືກຜົນກະທົບ;

b. ການສູນເສຍທາງດ້ານວັດຖຸ;

c. ຄວາມເສຍຫາຍຕໍ່ສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງຮ່າງ;

d. ຂອບເຂດຂອງພື້ນທີ່ບອ່ນທີ່ໄດ້ຮັບຜົນກະທົບທາງໄພພິບັດ;

e. ຜົນກະທົບທາງດ້ານເສດຖະກິດສັງຄົມ.

(3) ສຳລັບມາດຕະການເພີ່ມກ່ຽວກັບການຕົກລົງໃນການກຳນົດສະພາບການ ແລະ ລະດັບຂອງໄພພິບັດດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (2 ) ຈະຕ້ອງຖືກກຳນົດອອກໂດຍດຳລັດຂອງລັດຖະບານ ຫລື ຂອງນາຍົກລັດຖະມົນຕີ.

**ມາດຕາ 8**

ຄວາມຮັບຜິດຊອບຂອງລັດຖະບານໃນລະດັບແຂວງສຳລັບການຄຸ້ມຄອງຄວາສ່ຽງໄພພິບັດຈະຕ້ອງປະກອບດ້ວຍ:

a. ການຫລຸດຜ່ອນຄວາມສ່ຽງ ແລະ ການເຊື່ອມສານເຂົ້າໃນແຜນງານພັດທະນາລະດັບຊາດ;

b. ການປົກປ້ອງບັນດາຊຸມຊົນຕໍ່ກັບຜົນກະທົບຈາກໄພພິບັດ;

c. ການຟື້ນຟູຜົນກະທົບຈາກໄພພິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

d. ການຈັດສັນງົບປະມານສຳລັບການຄຸ້ມຄອງໄພພິບັດຢ່າງພຽງພໍຢູ່ໃນງົບປະມານລະດັບແຂວງ.

**ມາດຕາ 9**

ສິດອຳນາດຂອງລັດຖະບານຢູ່ໃນລະດັບແຂວງກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງປະກອບດ້ວຍ:

a. ການຕົກລົງໃນການກຳນົດນະໂຍບາຍການຄຸ້ມຄອງໄພພິບັດທີ່ສອດຄ່ອງກັບນະໂຍບາຍການພັດທະນາໃນລະດັບແຂວງ;

b. ການວາງແຜນພັດທະນາທີ່ປະກອບດ້ວຍບັນດາອົງປະກອບຂອງນະໂຍບາຍຄຸ້ມຄອງຄວາມສ່ຽງໄພພິບັດ,

c. ການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບການຮ່ວມມືໃນການຄຸ້ມຄອງຄວາມສ່ຽງໄພພິບັດກັບບັນດາແຂວງ ແລະ ເທດສະບານອື່ນ;

d. ລະບຽບການໃນການນຳໃຊ້ເຕັກໂນໂລຢີທີ່ກ່ຽວຂ້ອງກັບການປ້ອງກັນການນາບຂູ່ຂອງໄພພິບັດ

e. ການວາງນະໂຍບາຍກ່ຽວກັບການປ້ອງກັນການຄຸ້ມຄອງ ແລະ ການທຳລາຍຊັບພະຍາກອນທຳມະຊາດທີ່ຢູ່ນອກເໜືອຄວາມສາມາດຂອງການຟື້ນຟູ;

f. ຄວາມໂປ່ງໃສ່ ແລະ ຄວາມຮັບຜິດຊອບຕໍ່ກັບຊັບພະຍາກອນທີ່ໄດ້ຮັບການຊ່ວຍເຫລືອ ຫລື ທີ່ໄດ້ຈັດຊື້ເພື່ອນຳໃຊ້ເຂົ້າໃນບັນດາກິດຈະກຳໃນການຕອບໂຕ້ໄພພິບັດໃນລະດັບສູນກາງ ຫລື ລະດັບແຂວງ.

**ພາກ IV**

**ດ້ານສະຖາບັນ**

**ພາກທີໜຶ່ງ**

**ສຳນັກງານຄຸ້ມຄອງພິບັດແຫ່ງຊາດ**

**ມາດຕາ 10**

(1) ດັ່ງທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 5 ລັດຖະບານຈະຕ້ອງສ້າງຕັ້ງໃຫ້ມີສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ

(2) ດັ່ງທີ່ໄດ້ກຳນົດໄວ້ຢູ່ໃນວັກ (1) ສຳນັກຂອງຄຸ້ມຄອງໄພພິບັດແຫ່ງຊາດບໍ່ແມ່ນກົມໃດກົມໜຶ່ງຢູ່ພາຍໃນກົງຈັກລັດຖະບານ ຊຶ່ງຈະຕ້ອງຂຶ້ນກັບສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 11**

ດັ່ງທີ່ໄດ້ກຳນົດໄວ້ຢູ່ມາດຕາ 10 ວັກ (1) ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຕ້ອງປະກອບດ້ວຍອົງປະກອບດັ່ງນີ້:

a. ຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ.

b. ຄະນະຊີ້ນຳການຄຸ້ມຄອງລະດັບສູງ.

**ມາດຕາ 132**

ສຳນັກງານຄຸ້ມຄອງໄພພິບັດລະດັບຊາດມີໜ້າທີ່ຄື:

a. ໃຫ້ຄຳແນະນຳ ແລະ ທິດທາງກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດທີ່ປະກອບດ້ວຍການປ້ອງກັນໄພພິບັດ, ການຕອບໂຕ້ໃນສະພາບສຸກເສີນ; ການຟື້ນຟູແປງຄືນໃໝ່, ແລະ ການກໍ່ສ້າງສະຖາບັນຂອງລັດ ແລະ ຂອງຂະແໜງການເອກະຊົນຄືນໃໝ່;

b. ການກຳນົດມາດຕະຖານການຄຸ້ມຄອງຄວາມສ່ຽງໄພພິບັດ ແລະ ຫລັກການທາງດ້ານນິຕິກຳ;

c. ການສື່ສານຂໍ້ມູນກ່ຽວກັບກິດຈະກຳການຫລຸດຜ່ອນຄວາມສ່ຽງໄພພິບັດໃຫ້ແກ່ບັນດາພາກສ່ວນທີ່ກ່ຽວຂ້ອງກັບການຫລຸດຜ່ອນຄວາມສ່ຽງ;

d. ການລາຍງານກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດຕໍ່ນາຍົກລັດຖະມົນຕີເດືອນລະ 1 ເທື່ອ, ໃນສະພາບປົກກະຕິ ແລະ ລາຍງານເວລາໃດກໍ່ໄດ້ໃນໄລຍະສະພາບສຸກເສີນໄພພິບັດ;

e. ມີບັນຊີສຳລັບການນຳໃຊ້ງົບປະມານທີ່ເປັນການປະກອບສ່ວນ / ການຊ່ວຍເຫລືອຈາກສາກົນ ແລະ ພາຍໃນປະເທດ;

f. ມີບັນຊີສຳລັບການນຳໃຊ້ງົບປະມານທີ່ໄດ້ຮັບຈາກຂັ້ນສູນກາງ;

g. ປະຕິບັດພັນທະອື່ນ ໆ ຢ່າງສອດຄ່ອງກັບນິຕິກຳ;

h. ກະກຽມຂໍ້ແນະນຳກ່ຽວກັບການສ້າງຕັ້ງຫ້ອງການພາກສະໜາມຂອງສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ.

**ມາດຕາ 13**

ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງປະກອບດ້ວຍໜ້າວຽກດັ່ງນີ້:

a. ການກຳນົດ ແລະ ລະບຸນະໂຍບາຍກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດ ແລະ ການດູແລປະຊາຊົນທີ່ຍົກຍ້າຍ ແລະ ຊາວອົບພະຍົກໂດຍການປະຕິບັດວຽກງານແບບວ່ອງໄວ, ເໝາະສົມ, ມີປະສິດທິພາບ ແລະ ປະສິດທິຜົນ;

b. ການປະສານງານສຳລັບກິດຈະກຳການຄຸ້ມຄອງຄວາມສ່ຽງໄພພິບັດໃນຫລັກສະນະທີ່ມີການວາງແຜນດີ, ການເຊື່ອມສານ ແລະ ມີຄວາມລະອຽດ.

**ມາດຕາ 14**

(1) ຄະນະຄຸ້ມຄອງໄພພິບັດແຫ່ງຊາດດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 11 ຕ້ອງປະກອບມີໜ້າວຽກດັ່ງຕໍ່ໄປນີ້:

a. ກຳນົດແນວຄວາມຄ ິດຂອງນະໂຍບາຍກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດລະດັບຊາດ;

b. ການຕິດຕາມ;

c. ການປະເມີນຜົນການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ສະມາຊິກຂອງຄະນະກຳມະການປົກຄອງໄພພິບັດແຫ່ງຊາດດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (1) ຕ້ອງປະກອບດ້ວຍ:

a. ພະນັກງານຂອງລັດຖະບານຈາກພາກສ່ວນກ່ຽວຂ້ອງ;

b. ສະມາຊິກຂອງສະພາກາແດງລາວ ແລະ ຂອງສູນກາງຊາວໜຸ່ມ ແລະ ສະຫະພັນແມ່ຍິງ.

(3) ສະມາຊິກຂອງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດດັ່ງທີ່ໄດ້ກ່າວໄວ້ຢູ່ໃນດຳລັດຂອງນາຍົກລັດຖະມົນຕີເລກທີ 158 ລົງວັນທີ 23 ສິງຫາ 1999 ຈະຕ້ອງໄດ້ຮັບການແຕ່ງຕັ້ງໂດຍມີດຳລັດຂອງລັດຖະບານ ແລະ ຂອງນາຍົກລັດຖະມົນຕີ.

**ມາດຕາ 15**

(1) ການສ້າງຕັ້ງອົງປະກອບການຈັດຕັ້ງປະຕິບັດໃນການຄຸ້ມຄອງໄພພິບັດດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 11 ຂໍ້ b ຈະຕ້ອງຢູ່ພາຍໃຕ້ສິດອຳນາດ ຂອງລັດຖະບານ.

(2) ຄະນະຄຸ້ມຄອງລະດັບສູງດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (1) ຈະຕ້ອງມີໜ້າທີ່ໃນການປະສານງານ, ການສັ່ງການ, ແລະ ການປະຕິບັດການໃນການຄຸ້ມຄອງໄພພິບັດ.

(3) ສະມາຊິກຂອງຄະນະຄຸ້ມຄອງລະດັບສູງທີ່ກ່າວຢູ່ໃນວັກ (1) ຈະຕ້ອງປະກອບດ້ວຍບຸກຄະລາກອນ ແລະ ຊ່ຽວຊານ.

**ມາດຕາ 16**

ໃນການປະຕິບັດບົດບາດໜ້າທີ່ໂດຍອີງຕາມມາດຕາ 13 ຂໍ້ b ຄະນະຄຸ້ມຄອງລະດັບສູງໃນການຄຸ້ມຄອງໄພພິບັດຈະຕ້ອງໄດ້ຮັບໜ້າທີ່ແບບເຊື່ອມສານໃນໄລຍະ:

a. ໄລຍະກ່ອນການເກີດໄພພິບັດ

b. ໄລຍະຕອບໂຕ້ໃນສະພາບສຸກເສີນ;

c. ໄລຍະພາຍຫລັງເກີດໄພພິບັດ:

**ມາດຕາ 17**

ສໍາລັບຂໍ້ກໍານົດເພີ່ມເຕີມທີ່ກ່ຽວຂ້ອງກັບການສ້າງຕັ້ງ, ໜ້າວຽກຂີງເຂດວຽກງານ, ໂຄງຮ່າງການຈັດຕັ້ງ, ແລະ ການຈັດແຈງວຽກງານຂອງສໍານັກງານຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງຖືກກໍານົດໂດຍດໍາລັດປະທານປະເທດ.

**ພາກສອງ**

**ສໍານັກງານຄຸ້ມຄອງໄພພິບັດລະດັບແຂວງ**

**ມາດຕາ 18**

(1) ອໍານາດການປົກຄອງແຂວງດັ່ງທີ່ໄດ້ລະບຸໄວ້ຢູ່ໃນມາດຕາ 5 ຈະຕ້ອງສ້າງຕັ້ງໃຫ້ມີຫ້ອງການສາຂາຂອງສໍານັກງານຄຸ້ມຄອງໄພພິບັດລະດັບແຂວງ.

(2) ສໍານັກງານຄຸ້ມຄອງໄພພິບັດລະດັບແຂວງດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (1) ຕ້ອງປະກອບດ້ວຍ:

a. ສໍານັກງານລະດັບແຂວງ ເປັນປະທານໂດຍຮອງເຈົ້າແຂວງ ຫລື ຕໍາແໜ່ງທຽບເທົ່າ;

b. ສໍານັກງານລະດັບນະຄອນຫລວງເປັນປະທານໂດຍຕໍາແໜ່ງຮອງເຈົ້າຄອງນະຄອນ ຫລື ທຽບເທົ່າ.

**ມາດຕາ 19**

(1) ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຕ້ອງປະກອບດ້ວຍບັນດາອົງປະກອບຄື:

a. ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ;

b. ຄະນະຮັບຜິດຊອບຈັດຕັ້ງປະຕິບັດ.

(2) ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ກ່າວໄວ້ຢູ່ໃນວັກ (1) ຈະຕ້ອງຖືກສ້າງຕັ້ງໂດຍປະສານງານກັບສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ.

**ມາດຕາ 20**

ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງປະກອບມີໜ້າວຽກດັ່ງນີ້:

a. ສ້າງ ແລະ ກຳນົດນະໂຍບາຍຄຸ້ມຄອງຄວາມສ່ຽງ ແລະ ໄພພິບັດ, ແລະ ດູແລປະຊາຊົນຜູ້ທີ່ຖືກຍົກຍ້າຍ ແລະ ຊາວອົບພະຍົກໂດຍການປະຕິບັດວຽກງານຢ່າງໄວ້ວ່າ, ສອດຄ່ອງ, ມີປະສິດທິພາບ ແລະ ມີປະສິດທິຜົນ;

b. ປະສານງານໃນການຄຸ້ມຄອງໄພພິບັດໃນລັກສະນະທີ່ມີການວາງແຜນເປັນຢ່າງດີ, ປະສົມປະສານ ແລະ ລະອຽດ.

**ມາດຕາ 21**

ສຳນັກງານຄຸ້ມຄອງໄພພິບັດລະດັບແຂວງມີໜ້າວຽກດັ່ງຕໍ່ໄປນີ້:

a. ກຳນົດຂໍ້ຊີ້ນຳ ແລະ ທິດທາງຢ່າງສອດຄ່ອງກັບນະໂຍບາຍຂອງອຳນາດການປົກຄອງແຂວງ ແລະ ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດໃນການຄຸ້ມຄອງໄພພິບັດທີ່ປະກອບດ້ວຍການປ້ອງກັນ, ການຕອບໂຕໃນສະພາບສຸກເສີນ, ການຟື້ນຟູ ແລະ ການກໍ່ສ້າງຄືນໃໝ່;

b. ກຳນົດມາດຕະຖານການຄຸ້ມຄອງໄພພິບັດ ແລະ ລະບຽບຫລັກການໂດຍອີງໃສ່ນິຕິກຳ;

c. ກະກຽມ, ຕັດສິນບັນຫາ ແລະ ເຜີຍແຜ່ຂໍ້ມູນ ແລະ ແຜນການສຳລັບພື້ນທີ່ບ່ອນທີ່ໄດ້ຮັບຜົນກະທົບຈາກໄພພິບັດ;

d. ກະກຽມ ແລະ ຕັດສິນບັນຫາວຽກງານກ່ຽວກັບຂັ້ນຕອນການຕອບໂຕ້ໄພພິບັດ.

e. ປະຕິບັດວຽກງານໃນການຄຸ້ມຄອງຄວາມສ່ຽງໄພພິບັດ;

f. ລາຍງານກ່ຽວກັບການຄຸ້ມຄອງໄພພິບັດເຖິງອຳນາດການປົກຄອງແຂວງໃນແຕ່ລະເດືອນໃນສະພາບປົກກະຕິ ແລະ ລາຍງານເວລາໃດກໍ່ໄດ້ໃນໄລຍະທີ່ເກີດສະພາບສຸກເສີນໄພພິບັດ;

g. ມີຄວາມຮັບຜິດຊອບຕໍ່ທຸກການປະກອບສ່ວນທີ່ເປັນເງິນ ແລະ ວັດຖຸທີ່ໄດ້ຮັບຈາກການບໍລິຈາກເພື່ອສະພາບສຸກເສີນ;

h. ຮັບຜິດຊອບຕໍ່ການນຳໃຊ້ງົບປະມານຈາກຂັ້ນແຂວງ;

i. ປະຕິບັດພັນທະຢ່າງສອດຄ່ອງກັບນິຕິກຳ.

**ມາດຕາ 22**

(1) ຄະນະຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 19 ວັກ (1) ມີໜ້າທີ່ດັ່ງນີ້:

a. ກະກຽມວິທີການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບການຄຸ້ມຄອງໄພພິບັດຢູ່ຂັ້ນແຂວງ ແລະ ຂັ້ນເມືອງ;

b. ເຮັດການຕິດຕາມ;

c. ເຮັດການປະເມີນຜົນກ່ຽວກັບການຄຸ້ມຄອງຄວາມສ່ຽງໄພິບັດ.

(2) ສະມາຊິກຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ກ່າວໄວ້ຢູ່ໃນວັກ (1) ຕ້ອງປະກອບດ້ວຍ.

a. ພະນັກງານລັດໃນຂັ້ນແຂວງຈາກຂະແໜງການທີ່ກ່ຽວຂ້ອງ;

b. ສະມາຊິກຜູ້ທີ່ມີວິຊາການ ແລະ ຜູ້ມີຄວາມຊຳນິຊຳນານງານໃນຊຸມຊົນ.

(3) ສະມາຊິກຂອງຄະນະຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ກ່າວຢູ່ໃນວັກ (2) ຂໍ້ b ຕ້ອງໄດ◌້ຮັບການແຕ່ງຕັ້ງໂດຍເຈົ້າແຂວງ ແລະ ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ

**ມາຕາ 23**

(1) ການສ້າງຕັ້ງຄະນະຮັບຜິດຊອບປະຕິບັດງານການຄຸ້ມຄອງໄພພິບັດຢູ່ຂັ້ນທ◌້ອງຖິ່ນດັ່ງທີ່ກ່າວໄວ້ຢູ່ໃນມາດຕາ 19, ວັກ (1) ຂໍ້ b ຈະຕ້ອງຢູ່ພາຍໃຊ້ສິດອຳນາດຂອງອຳນາດການປົກຄອງແຂວງ

(2) ຄະນະຮັບຜິດຊອບຈັດຕັ້ງປະຕິບັດການຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (1) ຕ້ອງມີພາລະບົດບາດດັ່ງນີ້:

a. ການປະສານງານ;

b. ການສັ່ງການ;

c. ຈັດຕັ້ງປະຕິບັດການຄຸ້ມຄອງໄພພິບັດຢູ່ພາຍໃນແຂວງ.

(3) ສະມາຊິກຂອງຄະນະຮັບຜິດຊອບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດຂັ້ນແຂວງດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງປະກອບມີພະນັກງານວິຊາການ ແລະ ຊ່ຽວຊານ.

**ມາດຕາ 24**

ເພື່ອປະຕິບັດພາລະບົບບາດດັ່ງທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 23, ວັກ (2) ຄະນະຮັບຜິດຊອບການປະຕິບັດການຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງເຮັດໜ້າທີ່ແບບເຊື່ອມສານຢູ່ໃນໄລຍະ:

a. ໄລຍະກ່ອນການເກີດໄພພິບັດ;

b. ໄລຍະຕອບໂຕ້ໃນສະພາບສຸກເສີນ;

c. ໄລຍະພາຍຫລັງເກີດໄພພິບັດ.

**ມາດຕາ 25**

ສໍາລັບຂໍ້ກໍານົດເພີ່ມກ່ຽວກັບການສ້າງຕັ້ງ, ພາລະບົດບາດ, ໜ້າວຽກ, ໂຄງຮ່າງການຈັດຕັ້ງ, ແລະ ລະບຽບການດໍາເນີນງານຂອງສໍານັກງານຄຸ້ມຄອງໄພພິບັດຂັ້ນແຂວງຕ້ອງຢູ່ພາຍໃຕ້ລະບຽບຫລັກການຂັ້ນແຂວງ.

**ໝວດ V**

**ສິດ ແລະ ພັນທະຂອງຊຸມຊົນ**

**ພາກໜຶ່ງ**

**ສິດຂອງຊຸມຊົນ**

**ມາດຕາ 26**

(1) ທຸກຄົນມີສິດໃນການ:

a. ດຳລົງຊີວິດທີ່ມີຄວາມສະຫງົບສຸກທາງສັງຄົມ ແລະ ມີຄວາມປອດໄພ, ໂດຍສະເພາະແມ່ນປະຊາຊົນທີ່ຢູ່ໃນເຂດມີໄພພິບັດ;

b. ໄດ້ຮັບການສຶກສາ, ການຝຶກອົບຮົມ, ແລະ ຮຽນຮູ້ທັກສະໃນການຄຸ້ມຄອງຄວາມສ່ຽງໄພພິບັດ;

c. ໄດ້ຮັບຂໍ້ມູນຂ່າວສານໃນຮູບແບບທີ່ເປັນເອກະສານ ແລະ / ຫລື ທາງປາກເປົ່າກ່ຽວກັບນະໂຍບາຍການຄຸ້ມຄອງຄວາມສ່ຽງໄພພິບັດ,

d. ເຂົ້າຮ່ວມໃນການວ່າງແຜນ, ການດຳເນີນງານ ແລະ ການຄຸ້ມຄ້ອງບັນດາແຜນງານສະເພາະລວມທັງການສະໜັບສະໜູນທາງດ້ານຈິດຕະສັງຄົມ;

e. ເຂົ້າຮ່ວມໃນການຕັດສິນບັນຫາກ່ຽວກັບກິດຈະກຳການຄຸ້ມຄອງຄວາມສ່ຽງໄພພິບັດ, ໂດຍສະເພາະແມ່ນບັນດາກິດຈະກຳທີ່ກ່ຽວຂ້ອງກັບຊຸມຊົນຂອງຕົນເອງ;

f. ເຮັດການຊີ້ນຳຢ່າງສອດຄ່ອງກັນກົນໄກທາງດ້ານລະບຽບການສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ທຸກຄົນທີ່ໄດ້ຮັບຜົນກະທົບຈາກໄພພິບັດຕ້ອງມີສິດໄດ້ຮັບການຊ່ວຍເຫລືອເພື່ອຕອບສະໜອງຄວາມຕ້ອງການພື້ນຖານ.

(3) ທຸກຄົນມີສິດທີ່ຈະໄດ້ຮັບການທົດແທນຄືນສຳລັບການເສຍຫາຍທີ່ເກີດມາຈາກເຫດການໄພພິບັດອັນເນື່ອງມາຈາກຄວາມຜິດພາດຂອງການກໍ່ສ້າງ.

**ພາກສອງ**

**ພັນທະຂອງຊຸມຊົນ**

**ມາດຕາ 27**

ທຸກຄົນຕ້ອງມີພັນທະໃນການ:

a. ຮັກສາຄວາມກົມກຽວຂອງການດຳລົງຊີວິດທາງສັງຄົມໃນຊຸມຊົນ, ຮັກສາຄວາມດຸ່ນດຽງ, ຄວາມເປັນເອກະພາບກັນ, ຄວາມກົມກຽວ ແລະ ຄວາມຍືນຍົງຂອງການປົກປັກຮັກສາສິ່ງແວດລ້ອມ;

b. ປະຕິບັດກິດຈະກຳຕ່າງ ໆ ໃນການຄຸ້ມຄອງຄວາມສ່ຽງໄພພິບັດ;

c. ສະໜອງຂໍ້ມູນທີ່ຖືກຕ້ອງໃຫ້ແກ່ສາທາລະນະຊົນກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດ.

**ໝວດ VI**

## ພາລະບົດບາດຂອງພາກສ່ວນທຸລະກິດ ແລະ ສະຖາບັນສາກົນ

**ພາກໜຶ່ງ**

**ພາລະບົດບາດຂອງພາກສ່ວນທຸລະກິດ**

**ມາດຕາ 28**

ພາກສ່ວນທຸລະກິດມີໂອກາດໃນການເຂົ້າຮ່ວມການຄຸ້ມຄອງຄວາມສ່ຽງໄພພິບັດໃນຮູບແບບທີ່ດຳເນີນງານຮ່ວມກັນ ແລະ ເປັນຄູ່ຮ່ວມງານກັບພາກສ່ວນ ຫລື ສະຖາບັນອື່ນ ໆ.

**ມາດຕາ 29**

(1) ພາກສ່ວນທຸລະກິດຕ້ອງດັດປັບກິດຈະກຳຕ່າງ ໆຂອງເຂົາເຈົ້າເພື່ອໃຫ້ເຂົ້າກັບນະໂຍບາຍການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ພາກສ່ວນທຸລະກິດຈະຕ້ອງປະຕິບັດພັນທະໃນການສົ່ງບົດລາຍງານເຖິງລັດຖະບານ ແລະ / ຫລື ສຳນັກງານທີ່ຮັບຜິດຊອບການຄຸ້ມຄອງຄວາມສ່ຽງໄພພິບັດ ແລະ ແຈ້ງການໃຫ້ສາທາລະນະຊົນຮັບຮູ້.

(3) ພາກສ່ວນທຸລະກິດຕ້ອງປະຕິບັດພັນທະໃນການເຄົາລົບຫລັກການມະນຸດສະທຳໃນການດຳເນີນທຸລະກິດຂອງຕົນຢ່າງສອດຄ່ອງກັບການຄຸ້ມຄອງຄວາມສ່ຽງໄພພິບັດ.

**ພາກສອງ**

ພາລະບົດບາດຂອງບັນດາສະຖາບັນສາກົນ

**ມາດຕາ 30**

(1) ບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດສາມາດເຂົ້າຮ່ວມໃນບັນດາກິດຈະກຳຄຸ້ມຄອງຄວາມສ່ຽງໄພພິບັດ ແລະ ໄດ້ຮັບການປົກປ້ອງຈາກລັດຖະບານສຳລັບພະນັກງານ ແລະ ຄົນງານຂອງເຂົາເຈົ້າ.

(2) ບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດດັ່ງທີ່ໄດ້ກຳນົດໄວ້ຢູ່ໃນວັກ (1) ສາມາດເຂົ້າຮ່ວມເປັນຫລາຍບຸກຄົນໃນການຄຸ້ມຄອງຄວາມສ່ຽງໄພພິບັດ, ປະຕິບັດຮ່ວມ

ກັນ / ຫລື ຮ່ວມກັບຄູ່ຮ່ວມງານຕ່າງ ໆ ຂອງລັດຖະບານໂດຍອີງຕາມສະພາບການໃນລະດັບປະເທດ ແລະ ສະພາບການທາງດ້ານສັງຄົມຂອງຊຸມຊົນ ແລະ ວັດທະນາທຳຂອງຊຸມຊົນ.

(3) ສຳລັບຂໍ້ກຳນົດເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳໃນການຄຸ້ມຄອງຄວາມສ່ຽງໄພພິບັດທີ່ດຳເນີນໂດຍບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດຈະຕ້ອງຢູ່ພາຍໃຕ້ລະບຽບຫລັກການຂອງລັດຖະບານ.

## ໝວດ VII
## ການຄຸ້ມຄອງຄວາມສ່ຽງໄພພິບັດ

### ພາກໜຶ່ງ
### ໂດຍທົ່ວໄປ

#### ມາດຕາ 31

ການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງປະກອບດ້ວຍ 4 (ສີ່) ປະເດັນສຳຄັນຄື:

a. ຮູບແບບການດຳລົງຊີວິດທາງສັງຄົມ, ເສດຖະກິດ, ແລະ ວັດທະນາທຳ;

b. ການອະນຸລັກສິ່ງແວດລ້ອມ;

c. ຜົນປະໂຫຍດ ແລະ ປະສິດທິພາບ;

d. ຂອບເຂດຂອງເຂດນ້ຳແດນດິນ.

#### ມາດຕາ 32

(1) ໃນການຄຸ້ມຄອງຄວາມສ່ຽງ, ລັດຖະບານອາດຈະ:

a. ກຳນົດພື້ນທີ່ ທີ່ມີໄພພິບັດໂດຍຕະຕ້ອງເກືອດຫ້າມບໍ່ໃຫ້ມີການຕັ້ງຖິ່ນຖານ; ແລະ / ຫລື

b. ຖອນ ຫລື ຫລຸດຜ່ອນສິດຂອງແຕ່ລະບຸກຄົນໃນການເປັນເຈົ້າຂອງວັດຖຸສິ່ງຂອງໃດໜຶ່ງເປັນບາງສ່ວນ ຫລື ທັງໝົດໂດຍໃຫ້ສອດຄ່ອງກັບນິຕິກຳ.

(2) ບຸກຄົນໃດທີ່ສິດທິຂອງຕົນໃນການເປັນເຈົ້າຂອງຊັບສິນໄດ້ຖືກຖອນ ຫລື ຖືກຫລຸດຜ່ອນດັ່ງທີ່ໄດ້ກ່າວໄວ້ຢູ່ໃນວັກ (1) ຂໍ້ b ຕ້ອງໄດ້ຮັບສິດໃນການໄດ ້ຮັບການທົດແທນຄືນໂດຍອີງຕາມນິຕິກຳ.

**ພາກສອງ**

**ໄລຍະຕ່າງ ໆ**

**ມາດຕາ 33**

ການຄຸ້ມຄອງຄວາມສ່ຽງໄພພິບັດຕ້ອງປະກອບດ້ວຍ 3 (ສາມ) ໄລຍະຄື:

a. ກ່ອນການເກີດໄພພິບັດ;

b. ໄລຍະຕອບໂຕ້ສະພາບສຸກເສີນ;

c. ໄລຍະຫລັງເກີດໄພພິບັດ.

**ວັກທີ 1**

**ໄລຍະກ່ອນເກີດໄພພິບັດ**

**ມາດຕາ34**

ການຄຸ້ມຄອງຄວາມສ່ຽງໄພພິບັດໃນໄລຍະກ່ອນການເກີດໄພພິບັດດັ່ງທີ່ກຳນົດໄວ້ຢູ່ໃນມາດຕາ 33 ຂໍ້ a ຕ້ອງປະກອບດ້ວຍ:

a. ສະພາບການທີ່ບໍ່ມີໄພພິບັດ.

b. ສະພາບການທີ່ມີຄວາມສ່ຽງທີ່ຈະເກີດໄພພິບັດ.

**ມາດຕາ 35**

ການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ໃນສະພາບການທີ່ບໍ່ມີໄພພິບັດດັ່ງທີ່ກ ຳນົດໄວ້ຢູ່ໃນມາດຕາ 34 ຂໍ້ a ຕ້ອງປະກອບດ້ວຍ:

a. ການວາງແຜນການຄຸ້ມຄອງຄວາມສ່ຽງໄພພິບັດ;

b. ການຫລຸດຜ່ອນຄວາມສ່ຽງໄພພິບັດ;

c. ການປ້ອງກັນ;

d. ການເຊື່ອມສານວຽກງານເຂົ້າໃນການວາງແຜນການພັດທະນາ;

e. ການວິເຄາະຄວາມສ່ຽງໄພພິບັດ;

f. ການຈັດຕັ້ງປະຕິບັດແຜນການຄຸ້ມຄອງໄພພິບັດທີ່ແບ່ງເປັນໄລຍະ;

g. ການໃຫ້ຄວາມຮູ້ ແລະ ການຝຶກອົບຮົມ;

h. ມາດຕະຖານທາງດ້ານວິຊາການສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ.

**ມາດຕາ 36**

(1) ລັດຖະບານ ແລະ ອໍານາດການປົກຄອງແຂວງຕ້ອງກໍານົດການວາງແຜນການຄຸມຄອງຄວາມສ່ຽງໄພພິບັດດັ່ງທີ່ກໍານົດໄວ້ຢູ່ໃນມາດຕາ 35 ຂໍ້ a ໂດຍສອດຄ່ອງກັບສິດ ແລະ ອໍານາດຂອງຕົນ.

(2) ສໍານັກງານຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງປະສານງານກ່ຽວກັບການວາງແຜນຄຸ້ມຄອງໄພພິບັດດັ່ງທີ່ກໍານົດໄວ້ຢູ່ໃນວັກ (1).

(3) ການວາງແຜນການຄຸ້ມຄອງຄວາມສ່ຽງໄພພິບັດດັ່ງທີ່ກໍານົດຢູ່ໃນມາດຕາວັກ (1) ຈະຕ້ອງມີການກະກຽມຂໍ້ມູນກ່ຽວກັບຄວາມສ່ຽງໄພພິບັດທີ່ສຸມໃສ່ພື້ນທີ່ບ່ອນທີ່ມີໄພພິບັດໃນຂອບເຂດເວລາຕ່າງ ໆ ທີ່ສະເພາະເຈາະຈົງໂດຍອີງໃສ່ບັນດາເອກະສານການວາງແຜນກ່ຽວກັບການສ້າງຄວາມພ້ອມທາງດ້ານການຄຸ້ມຄອງໄພພິບັດທີ່ເປັນທາງການ ແລະ ບັນດາກິດຈະກໍາແຜນງານ.

(4) ການວາງແຜນການຄຸ້ມຄອງຄວາມສ່ຽງໄພພິບັດດັ່ງທີ່ກ່າວໄວ້ຢູ່ໃນວັກ (1) ຕ້ອງປະກອບດ້ວຍ:

a. ການຮັບຮູ້ ແລະ ການສໍາຫລວດສະພາບໄພຂົ່ມຂູ່ຂອງໄພພິບັດ;

b. ຄວາມເຂົ້າໃຈກ່ຽວກັບຄວາມສ່ຽງຂອງຊຸມຊົນ;

c. ການວິເຄາະຄວາມເປັນໄປໄດ້ຂອງຜົນກະທົບຈາກໄພພິບັດ;

d. ບັນດາທາງເລືອກເພື່ອປະຕິບັດມາດຕະການເພື່ອຫລຸດຜ່ອນຄວາມສ່ຽງຈາກໄພພິບັດ;

e. ການຄັດເລືອກເອົາກົນໄກສໍາລັບການຕິດຕາມ ແລະ ການພັດທະນາການຄຸ້ມຄອງຜົນກະທົບຈາກໄພພິບັດ;

f. ການມອບໝາຍໜ້າທີ່, ສິດອໍານາດ, ແລະ ຊັບພະຍາກອນທີ່ມີຢູ່.

(5) ລັດຖະບານຂັ້ນສູນກາງ ແລະ ຂັ້ນແຂວງຢູ່ພາຍໃນຂອບເຂດເວລາທີ່ໄດ້ຖືກກໍານົດ ຈະຕ້ອງທົບທວນຄືນບັນດາເອກະສານການວາງແຜນສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ.

(6) ສ້າງຄວາມກົມກຽວໃຫ້ບັນດາກິດຈະກຳໃນການວາງແຜນສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ, ໂດຍທີ່ວ່າລັດຖະບານ ແລະ ອຳນາດການປົກຄອງແຂວງອາດແຕ່ງຕັ້ງທີມງານຄຸ້ມຄອງໄພພິບັດຂື້ນມາໜຶ່ງທີມເພື່ອຈັດຕັ້ງປະຕິບັດແຜນການໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

**ມາດຕາ 37**

(1) ການຫລຸດຜ່ອນຄວາມສ່ຽງໄພພິບັດດັ່ງທີ່ກຳນົດໄວ້ຢູ່ໃນມາດຕາ 35 ຂໍ້ b ຕ້ອງແນໃສ່ຫລຸດຜ່ອນຜົນກະທົບໃນທາງບໍ່ດີທີ່ເປັນໄປໄດ້, ໂດຍສະເພາະແມ່ນຢູ່ໃນສະພາບການທີ່ຍັງບໍ່ທັນມີໄພພິບັດເກີດຂື້ນ.

(2) ບັນດາກິດຈະກຳທີ່ກ່າວຢູ່ວັກ (1) ຕ້ອງປະກອບດ້ວຍ:

a. ການຮັບຮູ້ ແລະ ການຕິດຕາມຄວາມສ່ຽງໄພພິບັດ;

b. ການວາງແຜນສະບັບການຄຸ້ມຄອງໄພພິບັດແບບມີສ່ວນຮ່ວມ;

c ການສົ່ງເສີມການສ້າງຈິດສຳນຶກກ່ຽວກັບໄພພິບັດ;

d. ເພີ່ມພັນທະຂອງທີມງານຄຸ້ມຄອງໄພພິບັດໃຫ້ຫລາຍຂື້ນ;

e. ການນຳໃຊ້ຄວາມພະຍາຍາມທາງດ້ານວັດຖຸ ແລະ ບໍ່ແມ່ນວັດຖຸ ແລະ ການນຳໃຊ້ຄຳສັງຕ່າງ ໆ ກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດ.

**ມາດຕາ 38**

ການປ້ອງກັນດັ່ງທີ່ກຳນົດຢູ່ໃນມາດຕາ 35 ຂໍ້ c ຕ້ອງປະກອບດ້ວຍ:

a. ການກຳນົດ ແລະ ການຮັບຮູ້ແຫລ່ງທີ່ມາຂອງໄພອັນຕະລາຍ ຫລື ໄພຂົ່ມຂູ່ທີ່ເປັນຄວາມສ່ຽງຈາກໄພພິບັດ;

b. ກວດກາກ່ຽວກັບການຄວບຄຸ້ມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເກີດຂື້ນ ແລະ ມີວິວັດການແບບຊ້າ ໆ ຫລື ໄວວາທີ່ຈະກາຍເປັນແຫລ່ງທີ່ມາຂອງໄພພິບັດ;

c. ການຕິດຕາມການນຳໃຊ້ເຕັກໂນໂລຢີສຳລັບການຕິດຕາມເຫດການທີ່ເກີດຂື້ນແບບຊ້າ ໆ ຫລື ໄວວາທີ່ມີຄວາມເປັນໄປໄດ້ທີ່ຈະກາຍເປັນແຫລ່ງທີ່ມາຂອງໄພພິບັດ;

d. ການຈັດໂຄງສ້າງທີ່ເປັນໄລຍະ ແລະ ການຄຸ້ມຄອງສິ່ງແວດລ້ອມ;

e. ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນກ່ຽວກັບການສ້າງຄວາມຕ້ານທານທາງສັງຄົມ.

**ມາດຄາ 39**

ການເຊື່ອມສານວຽກງານການຄຸ້ມຄອງຄວາມສ່ຽງໄພພິບັດເຂົ້າໃນການວາງແຜນການພັດທະນາດັ່ງທີ່ກຳນົດຢູ່ໃນມາດຕາ 35 ຂໍ້ d ຕ້ອງປະກອບດ້ວຍບັນດາອົງປະກອບການວາງແຜນໃນການຄຸ້ມຄອງຄວາມສ່ຽງໄພພິບັດທີ່ມີຢູ່ໃນແຜນການພັດທະນາຂັ້ນສູນກາງ ແລະ ຂັ້ນແຂວງ.

**ມາດຕາ 40**

(1) ແຜນການຄຸ້ມຄອງຄວາມສ່ຽງໄພພິບັດດັ່ງທີ່ກຳນົດໄວ້ຢູ່ໃນມາດຕາ 36 ວັກ (3) ຕ້ອງປະກອບມີການ ທົບທວນຄືນຢ່າງເປັນແຕ່ລະໄລຍະ.

(2) ການກະກຽມແຜນການຄຸ້ມຄອງໄພພິບັດດັ່ງທີ່ກຳນົດຢູ່ໃນວັກ (1) ຕ້ອງມີການປະສານງານກັບສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ.

(3) ກິດຈະກຳການພັດທະນາໃດໜຶ່ງທີ່ມີຄວາມສ່ຽງສູງຈາກໄພພິບັດຈະຕ້ອງມີການວິເຄາະຄວາມສ່ຽງໄພພິບັດຊຶ່ງແມ່ນສ່ວນໜຶ່ງຂອງການຄຸ້ມຄອງໄພພິບັດຢ່າງສອດຄ່ອງກັບສິດອຳນາດທີ່ກ່ຽວຂ້ອງ.

**ມາດຕາ 41**

(1) ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຕ້ອງກະກຽມ ແລະ ເຮັດການວິເຄາະຄວາມສ່ຽງໄພພິບັດຕາມການກຳນົດໄວ້ຢູ່ໃນມາດຕາ 35 ຂໍ້ e.

(2) ການເຮັດການວິເຄາະຄວາມສ່ຽງໄພພິບັດດັ່ງທີ່ກຳນົດໄວ້ຢູ່ໃນວັກ (1) ຈະຕ້ອງສະແດງອອກໃຫ້ເຫັນຢູ່ໃນເອກະສານໃດໜຶ່ງທີ່ຖືກຮັບຮອງໂດຍເຈົ້າໜ້າທີ່ລັດຖະບານໂດຍສອດຄ່ອງກັບນິຕິກຳ.

(3) ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງເຮັດການຕິດຕາມທີ່ມີການວິເຄາະກ່ຽວກັບຄວາມສ່ຽງ ແລະ ເຮັດການປະເມີນຜົນດັ່ງທີ່ໄດກຳນົດຢູ່ໃນວັກ (1).

**ມາດຕາ 42**

(1) ການຈັດຕັ້ງປະຕິບັດແຜນການທີ່ແບ່ງເປັນແຕ່ລະໄລຍະດັ່ງທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 35 ຂໍ້ f ຈະຕ້ອງມີຈຸດປະສົງເພື່ອຫລຸດຜ່ອນຄວາມສ່ຽງໄພພິບັດລວມທັງການປະຕິບັດຕາມບັນດາລະບຽບການກ່ຽວກັບການປະຕິບັດງານເປັນແຕ່ລະໄລຍະ, ມາດຕະຖານດ້ານຄວາມປອດໄພ, ແລະ ການວາງມາດຕະການລົງໂທດຕໍ່ຜູ້ທີ່ຝ່າຝືນ.

(2) ລັດຖະບານຈະຕ້ອງຕິດຕາມເປັນແຕ່ລະໄລຍະ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານເປັນແຕ່ລະໄລຍະ ແລະ ປະເມີນຜົນການບັນລຸຕາມມາດຕະຖານຄວາມປອດໄພດ້ານຕ່າງ ໆ.

**ມາດຕາ 43**

ລັດຖະບານຈະຕ້ອງກຳນົດ ແລະ ປະຕິບັດຫລັກການໃນການໃຫ້ຄວາມຮູ້, ການຝຶກອົບຮົມ ແລະ ມາດຕະຖານທາງດ້ານວິຊາການສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດດັ່ງທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 35 ຂໍ້ g ແລະ h ໂດຍໃຫ້ສອດຄ່ອງກັບນິຕິກຳ.

**ມາດຕາ 44**

ການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ໃນສະພາບການທີ່ມີຄວາມເປັນໄປໄດ້ທີ່ເກີດໄພພິບັດດັ່ງທີ່ກຳນົດໄວ້ຢູ່ໃນມາດຕາ 34 ຂໍ້ b ຕ້ອງປະກອບດ້ວຍ:

a. ການກະກຽມຄວາມພ້ອມ;

b. ການເຕືອນໄພລ່ວງໜ້າ;

c. ການຫລຸດຜ່ອນໄພພິບັດ;

**ມາດຕາ 45**

(1) ການກະກຽມຄວາມພ້ອມດັ່ງທີ່ໄດ້ກ່າວໄວ້ຢູ່ໃນມາດຕາ 44 ຂໍ້ a ຕ້ອງມີຈຸດປະສົງເພື່ອຮັບປະກັນໃຫ້ມີຄວາມພະຍາຍາມແບບວ່ອງໄວ ແລະ ເໝາະສົມໃນການປະເຊີນໜ້າກັບໄພພິບັດຕ່າງ ໆ.

(2) ການກະກຽມຄວາມພ້ອມດັ່ງທີ່ໄດ້ກ່າວຢູ່ໃນວັກ (1) ແມ່ນຮຽກຮ້ອງໃຫ້ມີ:

a. ການກະກຽມ ແລະ ການປະກາດນຳໃຊ້ແຜນການສຳລັບການຮັບມືກັບສະພາບສຸກເສີນແບບຈຳລອງ;

b. ການຈັດຕັ້ງ, ການຕິດຕັ້ງ, ແລະ ການທົດລອງລະບົບເຕືອນໄພລ່ວງໜ້າ;

c. ການສະໜອງ ແລະ ການກະກຽມວັດຖຸອຸປະກອນເພື່ອຕອບສະໜອງກັບຄວາມຕ້ອງການພື້ນຖານດ້ານຕ່າງ ໆ;

d ການຈັດຕັ້ງ, ການໃຫ້ຄຳປຶກສາ, ການຝຶກອົບຮົມ, ແລະ ການຝຶກຊ້ອມບັນດາກົນໄກຕອບໂຕ້ກັບສະພາບສຸກເສີນ;

e. ການກະກຽມສະຖານທີ່ສຳລັບການຍົກຍ້າຍໃນສະພາບສຸກເສີນ;

f. ການປະກອບໃຫ້ມີຂໍ້ມູນ ແລະ ສະຖິຕິທີ່ຊັດເຈນ ແລະ ດັດແກ້ລະບຽບການໃນການຕອບໂຕ້ກັບສະພາບສຸກເສີນໄພພິບັດຢ່າງທັນການ;

g. ການສະໜອງ ແລະ ການກະກຽມວັດຖຸອຸປະກອນ, ແລະ ເຄື່ອງຮັບໃຊ້ຕ່າງ ໆ ເພື່ອຟື້ນຟູສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງຮ່າງຢ່າງເຕັມສ່ວນ.

**ມາດຕາ 46**

(1) ການເຕືອນໄພລ່ວງໜ້າດັ່ງທີ່ກ່າວຢູ່ໃນມາດຕາ 44 ຂໍ້ b ຈະຕ້ອງແນໃສ່ປະຕິບັດການຢ່າງໄວວາ ແລະ ແທດເໝາະໃນການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ກະກຽມການປະຕິບັດການດ້ານຕ່າງ ໆ ເພື່ອຕອບໂຕ້ກັບສະພາບສຸກເສີນ.

(2) ການເຕືອນໄພລ່ວງໜ້າດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງປະກອບດ້ວຍ:

a. ການສັງເກດການເບິ່ງສັນຍານຂອງໄພພິບັດ.

b. ການວິເຄາະຜົນໄດ້ຮັບຂອງການສັງເກດການສັນຍານໄພພິບັດ;

c. ການຕັດສິນບັນຫາໂດຍເຈົ້າໜ້າທີ່ຝ່າຍຕ່າງ ໆ;

d. ການເຜີຍແຜ່ຂໍ້ມູນກ່ຽວກັບການເຕືອນໄພລ່ວງໜ້າ;

e. ການປະຕິບັດການດ້ານຕ່າງ ໆ ຂອງຊຸມຊົນ.

**ມາດຕາ 47**

(1) ການຫລຸດຜ່ອນໄພພິບັດດັ່ງທີ່ກ່າວຢູ່ໃນມາດຕາ 44 ຂໍ້ c ຕ້ອງມີຈຸດປະສົງເພື່ອຫລຸດຜ່ອນຄວາມສ່ຽງໄພພິບັດທີ່ຈະມີຕໍ່ຊຸມຊົນທີ່ຢູ່ໃນເຂດທີ່ມີຄວາມສ່ຽງໄພພິບັດ.

(2) ການຫລຸດຜ່ອນໄພພິບັດດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງປະກອບດ້ວຍ:

a. ການຈັດຕັ້ງປະຕິບັດການອອກແບບໂຄງສ້າງສິ່ງກໍ່ສ້າງທີ່ມີໄລຍະຫ່າງກັນ;

b. ລະບຽບການສຳລັບການພັດທະນາ, ການພັດທະນາພື້ນຖານໂຄງລ່າງ, ການອອກແບບການກໍ່ສ້າງ;

c. ການໃຫ້ຄວາມຮູ້, ການໃຫ້ຄຳປຶກສາ ແລະ ການຝຶກອົບຮົມແບບທົ່ວໄປ ແລະ ທັນສະໄໝ.

**ວັກທີ 1**

**ການຕອບໂຕ້ເຫດການສຸກເສີນ**

**ມາດຕາ 48**

ການຄຸ້ມຄອງໄພພິບັດໃນໄລຍະການຕອບໂຕ້ສະພາບສຸກເສີນດັ່ງທີ່ກ່າວຢູ່ໃນມາດຕາ 33 ຂໍ້ b ຕ້ອງ ປະກອບດ້ວຍ:

a. ການສຳຫລວດທີ່ໄວວາ ແລະ ເໝາະສົມກ່ຽວກັບສະຖານທີ່, ຄວາມເສຍຫາຍ, ແລະ ຊັບພະຍາກອນຕ່າງ ໆ;

b. ການກຳນົດສະພາບສຸກເສີນຂອງໄພພິບັດ;

c. ການຊ່ວຍກອບກູ້ ແລະ ການຍົກຍ້າຍຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ;

d. ການຕອບສະໜອງຄວາມຕ້ອງການພື້ນຖານດ້ານຕ່າງ ໆ.

e. ການປົກປ້ອງປະຊາກອນກຸ່ມທີ່ມີຄວາມສ່ຽງ;

f. ການປົວແປງພື້ນຟູໂດຍທັນທີບັນດາສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງຮ່າງ.

**ມາດຕາ 49**

ການສຳຫລວດຢ່າງໄວວາ ແລະ ເໝາະສົມດັ່ງທີ່ກ່າວຢູ່ໃນມາດຕາ 48 ຂໍ້ a ຕ້ອງແນໃສ່ກຳນົດຂອກຫາ:

a. ໄພພິບັດ ແລະ ພື້ນທີ່ແຜ່ກະຈ່າຍ ;

b. ຈຳນວນປະຊາກອນທີ່ໄດ້ຮັບຜົນກະທົບຂອງແຕ່ລະພື້ນທີ່,

c . ຄວາມເສຍຫາຍທີ່ມີຕໍ່ບັນດາສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງຮ່າງ;

d. ການກະທົບກະເທືອນຕໍ່ລະບົບການບໍລິການສາທາລະນະ ແລະ ການປົກຄອງຂອງລັດຖະບານ;

e. ຄວາມສາມາດຂອງຊັບພະຍາກອນທາງທຳມະຊາດ ແລະ ຊັບພະຍາກອນທີ່ມະນຸດສ້າງຂຶ້ນ.

**ມາດຕາ 50**

(1) ພາຍຫລັງທີ່ໄດ້ກຳນົດສະພາບສຸກເສີນໄພພິບັດ ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ ແລະ ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງຢູ່ໃນຖານະທີ່ສາມາດ:

a. ເຮັດການປຸກລະດົມຊັບພະຍາກອນມະນຸດ;

b. ເຮັດການປຸກລະດົມເອົາວັດຖຸອຸປະກອນ;

c. ເຮັດການປຸກລະດົມເອົາການຊ່ວຍເຫລືອດ້ານການບໍລິຫານ;

d. ການຄຸ້ມຄອງຄົນເຂົ້າອອກເມືອງ, excise ແລະ ການຄວບຄຸມການເຄື່ອນຍ້າຍສິນຄ້າຍ້ອນພະຍາດຕິດຕໍ່;

e. ການອອກອະນຸຍາດ;

f. ການຈັດຊື້ສິນຄ້າ / ການບໍລິການ;

g. ການຄຸ້ມຄອງ ແລະ ການຮັບຜິດຊອບຕໍ່ເງິນ ແລະ / ຫລື ວັດຖຸສິ່ງຂອງ;

h. ການຊ່ວຍກອບກູ້;

i. ການສັ່ງການໄປຍັງບັນດາຂະແໜງການ / ສະຖາບັນຕ່າງ ໆ.

(2) ສຳລັບບັນດາຂໍ້ກຳນົດເພີ່ມເຕີມທີ່ກ່ຽວຂ້ອງກັບການນຳໃຊ້ຄວາມສາມາດ ຫລື ການເຂົ້າເຖິງດັ່ງທີ່ກ່າວໃນວັກ (1) ຈະຕ້ອງຢູ່ພາຍໃຕ້ລະບຽບການໃດໜຶ່ງຂອງລັດຖະບານ.

**ມາດຕາ 51**

(1) ລັດຖະບານຕ້ອງຕັດສິນໃນການກຳນົດສະພາບສຸກເສີນໄພພິບັດໂດຍໃຫ້ສອດຄ່ອງກັບລະດັບຄວາມຮຸນແຮງຂອງໄພພິບັດ.

(2) ນາຍົກລັດຖະມົນຕີຕ້ອງອອກຄຳຕັດສິນສະພາບການດັ່ງທີ່ກຳນົດຢູ່ໃນວັກ (1) ກ່ຽວກັບລະດັບຄວາມຮ້າຍແຮງໃນລະດັບຊາດ, ແນະນຳເຈົ້າແຂວງ ຫລື ເຈົ້າຄອງນະຄອນກ່ຽວກັບລະດັບຄວາມຮຸນແຮງຂອງໄພພິບັດ.

**ມາດຕາ 52**

ກອບກູ້ ແລະ ຍົກຍ້າຍຜູ້ເຄາະຮ້າຍດັ່ງທີ່ໄດ້ກຳນົດຢູ່ໃນມາດຕາ 48 ຂໍ້ c ໂດຍຈະຕ້ອງປະຕິບັດວຽກງານທາງດ້ານມະນຸດສະທຳຢູ່ພາຍໃນພື້ນທີ່ໄພພິບັດໂດຍການ:

a. ຊອກຄົ້ນຫາ ແລະ ຊ່ວຍກອບກູ້ປະຊາຊົນຜູ້ທີ່ຖືກເຄາະຮ້າຍ;

b. ໃຫ້ການຊ່ວຍເຫລືອສະພາບສຸກເສີນ; / ຫລື

c. ຍົກຍ້າຍປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ.

**ມາຕາ 53**

ໃນການຕອບສະໜອງຄວາມຕ້ອງການພື້ນຖານດັ່ງທີ່ໄດ້ກ່າວຢູ່ໃນມາດຕາ 48 ຂໍ້ d ຈະຕ້ອງປະກອບດ້ວຍການຊ່ວຍເຫລືອສຳລັບ.

a. ຄວາມຕ້ອງການນ້ຳກິນ ນ້ຳໃຊ້ ແລະ ສຸຂະພິບານ;

b. ອາຫານ;

c. ເຄື່ອງນຸ່ງຫົ່ມ;

d. ການຮັກສາສຸຂະພາບ;
e. ການບໍລິຫານທາງດ້ານຈິດຕະສັງຄົມ;
f. ສິ່ງອໍານວຍຄວາມສະດວກສໍາລັບການພັກເຊົາ ແລະ ຄວາມປອດໄພ.

**ມາດຕາ 54**

ການດູແລຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ປະຊາຊົນທີ່ໄດ້ຖືກຍົກຍ້າຍ ແລະ ຊາວອົບພະຍົບຕ້ອງປະກອບດ້ວຍວຽກງານການເກັບກໍາຂໍ້ມູນ, ການຍົກຍ້າຍປະຊາຊົນໄປຢູ່ເຂດປອດໄພ, ແລະ ການຕອບສະໜອງຄວາມຕ້ອງການພື້ນຖານດ້ານຕ່າງ ໆ.

**ມາດຕາ 55**

(1) ການປົກປ້ອງປະຊາຊົນກຸ່ມທີ່ມີຄວາມສ່ຽງດັ່ງທີ່ໄດ້ກ່າວຢູ່ໃນມາດຕາ 48 ຂໍ້ e ຈະຕ້ອງຈັດບຸລິມະສິດໃຫ້ແກ່ກຸ່ມທີ່ມີຄວາມສ່ຽງໃນດ້ານການກອບກູ້, ການຍົກຍ້າຍ, ການປົກປ້ອງ, ການຮັກສາສຸຂະພາບ, ແລະ ການບໍລິການດູແລດ້ານຈິດຕະສັງຄົມ.
(2) ກຸ່ມທີ່ມີຄວາມສ່ຽງດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງປະກອບມີ:
a. ເດັກອ່ອນ, ເດັກອະນຸບານ, ແລະ ເດັກນ້ອຍທົ່ວໄປ,
b. ແມ່ຍິງຖືພາ ຫລື ແມ່ລູກອ່ອນ;
c. ຄົນພິການ;
d. ຄົນສູງອາຍຸ.

**ມາດຕາ 56**

ການປົວແປງຟື້ນຟູສິ່ງອໍານວຍຄວາມສະດວກທີ່ຈໍາເປັນ ແລະ ພື້ນຖານໂຄງຮ່າງດັ່ງທີ່ກ່າວຢູ່ໃນມາດຕາ 48 ຂໍ້ f ຈະຕ້ອງປະກອບດ້ວຍການສ້ອມແປງຄືນ ແລະ / ຫລື ການປ່ຽນແທນສິ່ງທີ່ຖືກເສຍຫາຍເປ່ເພຈາກໄພພິບັດ.

**ວັກ 3**

**ໄລຍະຫລັງໄພພິບັດ**

**ມາດຕາ 57**

ການຄຸ້ມຄອງໄພພິບັດໃນໄລຍະຫລັງໄພພິບັດດັ່ງທີ່ກ່າວຢູ່ໃນມາດຕາ 33 ຂໍ້ c ຕ້ອງປະກອບດ້ວຍ:
a. ການຟື້ນຟູ;

b. ການກໍ່ສ້າງຄືນໃໝ່.

**ມາດຕາ 58**

(1) ການຟື້ນຟູດັ່ງທີ່ກ່າວຢູ່ໃນມາດຕາ 57 ຂໍ້ a ປະກອບດ້ວຍ:

a. ການປັບປຸງສະພາບແວດລ້ອມຢູ່ໃນເຂດໄພພິບັດ;

b. ການສ້ອມແປງສິ່ງອຳນວຍຄວາມສະດວກສາທາລະນະຊົນ ແລະ ພື້ນຖານໂຄງຮ່າງຕ່າງ ;

c. ການສະໜອງການຊ່ວຍເຫລືອໃຫ້ແກ່ການສ້ອມແປງເຮືອນຢູ່ຂອງປະຊາຊົນ;

d. ການຟື້ນຟູທາງດ້ານສັງຄົມ ແລະ ຈິດຕະສາດ;

e. ການດູແລສຸຂະພາບ;

f. ການໄກ່ເກັ່ຍ ແລະ ການແກ້ໄຂຂໍ້ຂັດແຍ່ງ;

g. ການຟື້ນຟູທາງດ້ານເສດຖະກິດສັງຄົມ ແລະ ວັດທະນາທຳ;

h. ການຟື້ນຟູດ້ານຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ;

i. ການຟື້ນຟູຄືນວຽກງານການບໍລິຫານຂອງລັດຖະບານ;

j. ການຟື້ນຟູຄືນການບໍລິການຕ່າງ ໆ ຂອງສາທາລະນະຊົນ.

(2) ສຳລັບຂໍ້ກຳນົດເພີ່ມເຕີມກ່ຽວກັບການຟື້ນຟູປົວແປງດັ່ງທີ່ກ່າວຢູ່ໃນວັກ (1) ຈະຕ້ອງຢູ່ພາຍໃຕ້ລະບຽບການໃດນຶ່ງຂອງລັດຖະບານ.

**ມາດຕາ 59**

(1) ການກໍ່ສ້າງຄືນໃໝ່ດັ່ງທີ່ກ່າວຢູ່ໃນມາດຕາ 57 ຂໍ້ b ຕ້ອງປະກອບມີບັນດາກິດຈະກຳດ້ານການພັດທະນາທີ່ມີປະສິດທິພາບ ຊຶ່ງລວມມີ:

a. ການກໍ່ສ້າງຄືນໃໝ່ຂອງບັນດາສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງລ່າງ;

b. ການກໍ່ສ້າງຄືນໃໝ່ຂອງບັນດາສິ່ງອຳນວຍຄວາມສະດວກທາງສັງຄົມຂອງຊຸມຊົນ;

c. ການປົວແປງຄືນໃໝ່ຊີວິດທາງດ້ານສັງຄົມ ແລະ ວັດທະນະທຳຂອງຊຸມຊົນ;

d. ການນຳໃຊ້ການອອກແບບອຸປະກອນເຄື່ອງໃຊ້ຢ່າງສອດຄ່ອງທີ່ມີການປັບປຸງ ແລະ ມີຄວາມຕ້ານທານກັບໄພພິບັດ;

e. ການເຂົ້າຮ່ວມຂອງບັນດາສະຖາບັນທາງສັງຄົມ ແລະ ອົງການຈັດຕັ້ງຕ່າງ ໆ, ຂະແໜງເອກະຊົນ, ແລະ ຊຸມຊົນ;

f. ການປັບປຸງເງື່ອນໄຂທາງສັງຄົມ, ເສດຖະກິດ ແລະ ວັດທະນະທຳ;

g. ການປັບປຸງລະບົບວຽກງານບໍລິການສາທາລະນະ;

h. ການປັບປຸງການບໍລິການຕ່າງ ໆທີ່ຈຳເປັນຢູ່ພາຍໃນຊຸມຊົນ.

(2) ສຳລັບຂໍ້ກຳນົດເພີ່ມເຕີມກ່ຽວກັບການກໍ່ສ້າງຄືນໃໝ່ດັ່ງທີ່ກ່າວຢູ່ໃນວັກ (1) ຈະຕ້ອງຢູ່ພາຍໃຕ້ລະບຽບການໃດໜຶ່ງຂອງລັດຖະບານ.

**ໝວດ VIII**
**ການຊ່ວຍເຫລືອດ້ານການເງິນສຳລັບໄພພິບັດ ແລະ ການຄຸ້ມຄອງ**
**ພາກໜຶ່ງ**
**ການຊ່ວຍເຫລືອທາງການເງິນ**

**ມາດຕາ 60**

(1) ລັດຖະບານຂັ້ນສູນກາງ ແລະ ຂັ້ນແຂວງຈະຕ້ອງມີຄວາມຮັບຜິດຊອບຮ່ວມກັນສຳລັບກອງທຶນຄຸ້ມຄອງສິ່ງແວດລ້ອມ.
(2) ລັດຖະບານຂັ້ນສູນກາງ ແລະ ຂັ້ນແຂວງຈະຕ້ອງສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການສະໜອງທຶນ.

**ມາດຕາ 61**

(1) ລັດຖະບານຂັ້ນສູນກາງ ແລະ ຂັ້ນແຂວງຕ້ອງຈັດວາງງົບປະມານສຳລັບການຄຸ້ມຄອງໄພພິບັດຢ່າງພຽງພໍໂດຍອີງຕາມຂໍ້ກຳນົດໃນມາດຕາ 6 ຂໍ້ e, ຂໍ້ f ແລະ ມາດຕາ 8 ຂໍ້ d.
(2) ລັດຖະບານຂັ້ນສູນກາງ, ອຳນາດການປົກຄອງແຂວງ, ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ ແລະ ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງນຳໃຊ້ການຈັດສັນງົບປະມານສຳລັບການຄຸ້ມຄອງໄພພິບັດດັ່ງທີ່ກ່າວຢູ່ໃນວັກ (1) ໂດຍໃຫ້ສອດຄ່ອງກັບໜ້າທີ່ ແລະ ຂົງເຂດວຽກງານຂອງຕົນ.

**ມາດຕາ 62**

(1) ໃນໄລຍະເຮັດການຕອບໂຕ້ກັບສະພາບສຸກເສີນ ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ / ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງໃຊ້ກອງທຶນສຸກເສີນດັ່ງທີ່ກ່າວຢູ່ໃນມາດຕາ 6 ຂໍ້ f.
(2) ລັດຖະບານຈະຕ້ອງສະໜອງໃຫ້ມີກອງທຶນກຽມພ້ອມດັ່ງທີ່ກ່າວຢູ່ໃນວັກ (1) ຢູ່ໃນງົບປະມານຂອງສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ.

**ມາດຕາ 63**

ສໍາລັບຂໍ້ກໍານົດເພີ່ມເຕີມກ່ຽວກັບກົນໄກນໍາໃຊ້ກອງທຶນສໍາລັບການຄຸ້ມຄອງໄພພິບັດດັ່ງທີ່ກ່າວຢູ່ໃນມາດຕາ 60 ຫາ ມາດຕາ 62 ຈະຕ້ອງຢູ່ພາຍໃຕ້ລະບຽບການໃດໜຶ່ງຂອງລັດຖະບານ.

**ພາກສອງ**

**ການຄຸ້ມຄອງເງິນຊ່ວຍເຫລືອໄພພິບັດ**

**ມາດຕາ 64**

ການຄຸ້ມຄອງເງິນຊ່ວຍເຫລືອໄພພິບັດຕ້ອງປະກອບມີການວາງແຜນ, ການນໍາໃຊ້, ການບໍາລຸງຮັກສາ, ການຕິດຕາມ ແລະ ການປະເມີນຜົນບັນດາວັດຖຸສິ່ງຂອງ, ການບໍລິການຕ່າງໆ ແລະ / ຫລື ບັນດາກອງທຶນຊ່ວຍເຫລືອຈາກພາຍໃນປະເທດ ແລະ ສາກົນ.

**ມາດຕາ 65**

ລັດຖະບານ, ອໍານາດການປົກຄອງແຂວງ, ສໍານັກງານຄຸ້ມຄອງໄພພິບັດແຫ່ງຊາດ ແລະ ສໍານັກງານຄຸ້ມຄອງໄພພິບັດຂັ້ນແຂວງຕ້ອງປະຕິບັດການຄຸ້ມຄອງທຶນຊ່ວຍເຫລືອດັ່ງທີ່ກ່າວຢູ່ໃນມາດຕາ 65 ຢູ່ໃນໄລຍະຕ່າງ ໆ ຂອງການເກີດໄພພິບັດຢ່າງສອດຄ່ອງກັບນິຕິກໍາ.

**ມາຕາ 66**

ໃນໄລຍະຕອບໂຕ້ສະພາບສຸກເສີນໄພພິບັດ ສໍານັກງານຄຸ້ມຄອງໄພພິບັດແຫ່ງຊາດຕ້ອງຊີ້ນໍາການນໍາໃຊ້ທຶນຊ່ວຍເຫລືອໄພພິບັດທີ່ມີຢູ່ໃນທຸກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 67**

ບັນດາລະບຽບການສໍາລັບການນໍາໃຊ້ ແລະ ຄວາມຮັບຜິດຊອບຕໍ່ທຶນຊ່ວຍເຫລືອໄພພິບັດໃນໄລຍະການຕອບໂຕ້ໃນສະພາບສຸກເສີນຈະຕ້ອງດັດປັບໃຫ້ແທດເໝາະກັບຄວາມຕ້ອງການ, ສະພາບການ ແລະ ເງື່ອນໄຂຕ່າງ ໆ ຂອງສະພາບສຸກເສີນ.

**ມາດຕາ 68**

(1) ລັດຖະບານ ແລະ ອໍານາດການປົກຄອງແຂວງຕ້ອງສະໜອງເງິນທົດແທນສໍາລັບການບັນເທົາທຸກ ແລະ ການເປັນພິການໃຫ້ແກ່ຜູ້ເຄາະຮ້າຍຈາກໄພພິບັດ.

(2) ຜູ້ເຄາະຮ້າຍຈາກໄພພິບັດຜູ້ທີ່ສູນເສຍຮູບແບບການດໍາລົງຊີວິດສາມາດຮັບເງິນກູ້ຢືມດ້ວຍອັດຕາດອກເບ້ຍຕໍ່າເພື່ອສ້າງຕັ້ງກິດຈະການຜະລິດຄືນໃໝ່.

(3) ລັດຖະບານ ແລະ ອຳນາດການປົກຄອງແຂວງຕ້ອງຮັບຜິດຊອບໃນການສະໜອງເງິນທົດແທນສຳລັບການບັນເທົາທຸກ ແລະ ການເປັນພິການດັ່ງທີ່ກ່າວຢູ່ໃນວັກ (1) ແລະ ເງິນກູ້ດ້ວຍດອກເບັ້ຍຕ່ຳສຳລັບການຟື້ນຟູກິດຈະການຜະລິດຄືນໃໝ່ດັ່ງທີ່ກ່າວຢູ່ໃນວັກ (2).

(4) ບັນດາລະບຽບການ ແລະ ຈຳນວນເງິນຊ່ວຍເຫລືອດັ່ງທີ່ກ່າວຢູ່ໃນນວັກ (1) ແລະ ວັກ (2) ຕ້ອງຢູ່ພາຍໃຕ້ລະບຽບການໃດໜຶ່ງຂອງລັດຖະບານ.

(5) ບັນດາອົງປະກອບຊຸມຊົນອາດເຂົ້າຮ່ວມໃນການສະໜອງທຶນຊ່ວຍເຫລືອ.

**ມາດຕາ 69**

ການຄຸ້ມຄອງເງິນຊ່ວຍເຫລືອໄພພິບັດດັ່ງທີ່ກ່າວຢູ່ໃນມາດຕາ 65 ຫາ ມາດຕາ 69 ຕ້ອງຖືກຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບນິຕິກຳ.

## ໝວດ IX
## ການຊີ້ນຳ

**ມາດຕາ 70**

1) ລັດຖະບານ ແລະ ອຳນາດການປົກຄອງແຂວງຕ້ອງຊີ້ນຳທຸກໄລຍະຂອງການຄຸ້ມຄອງຄວາມສ່ຽງໄພພິບັດ.

2) ການຊີ້ນຳດັ່ງທີ່ກ່າວຢູ່ໃນວັກ (1) ປະກອບດ້ວຍ:

a. ແຫລ່ງຂອງໄພພິບັດທີ່ນາບຂູ່;

b. ນະໂຍບາຍໃນການພັດທະນາທີ່ຄຳນຶງເຖິງຄວາມສ່ຽງໄພພິບັດໄປພ້ອມ;

c. ການປະຕິບັດກິດຈະກຳທີ່ຄຳນຶງເຖິງຄວາມສ່ຽງໄພພິບັດ;

d. ການນຳໃຊ້ວັດທຸສິ່ງຂອງ, ການບໍລິການ, ເຕັກໂນໂລຍີ ແລະ ວິສະວະກອນ ແລະ ຄວາມສາມາດໃນການອອກແບບພາຍໃນປະເທດ;

e. ກິດຈະກຳການອະນຸລັກສິ່ງແວດລ້ອມ;

f. ການວາງແຜນສຳລັບໂຄງສ້າງສິ່ງກໍ່ສ້າງທີ່ມີໄລຍະຫ່າງກັນ;

g. ການຄຸ້ມຄອງສິ່ງແວດລ້ອມ;

h. ກິດຈະກຳການທວງຄືນໃໝ່;

i. ການຄຸ້ມຄອງການເງິນ;

**ມາດຕາ 71**

(1) ໃນການຊີ້ນຳບົດລາຍງານກ່ຽວກັບການເກັບກຳການປະກອບສ່ວນຕ່າງ ໆ, ລັດຖະບານ ແລະ ອຳນາດການປົກຄອງແຂວງອາດຮຽກຮ້ອງໃຫ້ມີການກວດສອບການລາຍງານກ່ຽວກັບການເກັບກຳການປະກອບສ່ວນຊ່ວຍເຫລືອຕ່າງ ໆ.

(2) ໂດຍອີງໃສ່ການລາຍງານທີ່ກ່າວຢູ່ໃນວັກ (1) ລັດຖະບານ ແລະ ຊຸມຊົນອາດຮຽກຮ້ອງໃຫ້ມີການກວດສອບ.

(3) ຖ້າວ່າການກວດສອບດັ່ງທີ່ກ່າວຢູ່ໃນວັກ (2) ຫາກສະແດງໃຫ້ເຫັນສິ່ງທີ່ບໍ່ຖືກຕ້ອງໃນການນຳໃຊ້ສິ່ງປະກອບສ່ວນຊ່ວຍເຫລືອ ຜູ້ທີ່ນຳໃຊ້ສິ່ງປະກອບສ່ວນຊ່ວຍເຫລືອທີ່ໄດ້ຖືກເກັບກຳມານັ້ນຈະຕ້ອງຖືກລົງໂທດໂດຍອີງຕາມນິຕິກຳ.

**ມາດຕາ 72**

ການຊີ້ນຳດັ່ງທີ່ກ່າວຢູ່ໃນມາດຕາ 70 ແລະ ມາດຕາ 71 ຕ້ອງຖືກຈັດຕັ້ງປະຕິບັດຢ່າງສອດຄ່ອງກັບກົດໝາຍບ້ານເມືອງ;

## ໝວດ X
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 73**

(1) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງໄພພິບັດຢູ່ໃນໄລຍະທຳອິດຕ້ອງອີງໃສ່ການປຶກສາຫາລືເພື່ອຕົກລົງກັນ.

(2) ໃນກໍລະນີບໍ່ສາມາດຕົກລົງກັນໄດ້ໃນການແກ້ໄຂຂໍ້ຂັດແຍ່ງດັ່ງທີ່ກ່າວຢູ່ໃນວັກ (1) ຄູ່ກໍລະນີອາດຕົກລົງທີ່ຈະແກ້ໄຂຂໍ້ຂັດແຍງຢູ່ໃນ ຫລື ນອກສານ.

## ໝວດ XI
## ຂໍ້ກຳນົດສຳລັບໄລຍະຂ້າມຜ່ານ

**ມາດຕາ 74**

ພາຍຫລັງກົດໝາຍສະບັບນີ້ມີຜົນສັກສິດ ນິຕິກຳໃດ ໆກໍ່ຕາມທີ່ກ່ຽວຂ້ອງກັບຄວາມຕ້ອງການຄວາມສ່ຽງໄພພິບັດກໍ່ຍັງຈະຖືວ່າມີຜົນສັກສິດເໝືອນເດີມຕາບໃດທີ່ບໍ່ມີເນື້ອໃນຂັດກັນ ຫລື ບໍ່ມີການອອກລະບຽບການສຳລັບການປະຕິບັດສະບັບໃໝ່ທີ່ຈະມາປ່ຽນແທນກົດໝາຍສະບັບນີ້.

**ມາດຕາ 75**

ແຜນງານກິດຈະກຳໃດກໍ່ຕາມທີ່ກ່ຽວຂ້ອງກັບການຄຸ້ມຄອງໄພພິບັດທີ່ໄດ້ຖືກກຳນົດອອກກ່ອນການອອກກົດໝາຍສະບັບນີ້ຈະຕ້ອງຖືກຮັກສາມີຜົນສັກສິດເໝືອນເດີມຈົນກວ່າຈະສິ້ນສຸດກຳນົດການໃຊ້ໄດ້ຂອງມັນ ນອກຈາກຈະມີການກຳນົດອອກເປັນຢ່າງອື່ນໂດຍນິຕິກຳ.

**ມາດຕາ 76**

(1) ກ່ອນການສ້າງຕັ້ງສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດຂອງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດອາດຍັງສາມາດດຳເນີນບັນດາໜ້າວຽກຂອງຕົນໄດ້.

(2) ພາຍຫລັງສ້າງຕັ້ງສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຄືນແລ້ວ ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງຖືກລົບລ້າງ.

**ໝວດ XIII**
**ຂໍ້ບັນຍັດສຸດທ້າຍ**

**ມາດຕາ 77**

ພາຍຫລັງກົດໝາຍສະບັບນີ້ມີຜົນສັກສິດ ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດຈະຕ້ອງຖືກສ້າງຕັ້ງຂຶ້ນໃນໄລຍະເວລາທີ່ບໍ່ເກີນ 6 (ຫົກ) ເດືອນ ແລະ ສຳນັກງານຄຸ້ມຄອງໄພພິບັດຂັ້ນແຂວງຈະຕ້ອງຖືກສ້າງຕັ້ງຂຶ້ນພາຍໃນເວລາທີ່ບໍ່ເກີນກວ່າ 1 (ໜຶ່ງ) ປີ.

**ມາດຕາ 78**

ດຳລັດຂອງລັດຖະບານວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍສະບັບນີ້ຈະຕ້ອງຖືກກຳນົດອອກພາຍໃນຂອບເຂດເວລາທີ່ກໍ່ເກີນ 6 (ຫົກ) ເດືອນ ພາຍຫລັງໄດ້ປະກາດໃຊ້ກົດໝາຍສະບັບນີ້.

**ມາດຕາ 79**

ກົດໝາຍສະບັບນີ້ມີຜົນສັກສິດໃນວັນທີ່ ປະກາດນຳໃຊ້. ເພື່ອເຮັດໃຫ້ກົດໝາຍສະບັບນີ້ເປັນທີ່ຮັບຮູ້ໂດຍປະຊາຊົນທົ່ວໄປ ຈິ່ງມີຄວາມຈຳເປັນທີ່ຈະຕ້ອງແຈ້ງການກົດໝາຍສະບັບນີ້ໄປຍັງທຸກພາກສ່ວນຂອງລັດຖະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງກັບການຫລຸດຜ່ອນຄວາມສ່ຽງໄພພິບັດຢູ່ໃນ ສປປ ລາວ.

ປະທານປະເທດ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

(ລາຍເຊັນ)

**ຮ່າງດຳລັດນາຍົກລັດຖະມົນຕີ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ສຳນັກງານນາຍົກລັດຖະມົນຕີ**

**ເລກທີ.../ ນຍ**

**ທີ່ວຽງຈັນ, ວັນທີ: ...**

# ດຳລັດ

## ວ່າດ້ວຍລະບຽບຫລັກການຂອງລັດຖະບານກ່ຽວກັບການເຂົ້າຮ່ວມຂອງສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດ

**ໂດຍພິຈາລະນາ:** ທີ່ວ່າເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງໄພພິບັດ ມັນມີຄວາມຈຳເປັນທີ່ຈະຕ້ອງອອກດຳລັດຂອງລັດຖະບານວ່າດ້ວຍການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງໄພພິບັດ;

**ໂດຍສັງເກດການ:** ດຳລັດຂອງນາຍົກລັດຖະມົນຕີເລກທີ 158 ລົງວັນທີ 23 ສິງຫາ 1999 ວ່າດ້ວຍການສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດຂອງ ສປປ ລາວ; ມະຕິຕົກລົງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມວ່າດ້ວຍການກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ

NDMC ເລກທີ 097 / ກຣສສ ລົງວັນທີ 30 ມິຖຸນາ 2000; ດຳລັດຂອງນາຍົກລັດຖະມົນຕີເລກທີ 377 ລົງວັນ 9 ທັນວາ 2005 ວ່າດ້ວຍການສ້າງຕັ້ງຄະນະກຳມະການແຫ່ງຊາດວ່າດ້ວຍການຄວບຄຸມພະຍາດຕິດຕໍ່ (CDC).

**ນາຍົກລັດຖະມົນຕີອອກດຳລັດ:**

**ວ່າດ້ວຍການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ**

**ໝວດ I**

**ຂໍ້ກຳນົດທົ່ວໄປ**

**ມາດຕາ 1**

ໂດຍອີງຕາມດຳລັດສະບັບນີ້ ຄຳນິຍາມຂອງສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດມີຄືດັ່ງຕໍ່ໄປນີ້:

1. ສະຖາບັນສາກົນໝາຍເຖິງບັນດາສະຖາບັນພາຍໃນອົງການສະຫະປະຊາຊາດ, ໂຄງຮ່າງການຈັດຕັ້ງຂອງອົງການສະຫະປະຊາຊາດ ຫລື ຕົວແທນຂອງອົງການສະຫະປະຊາຊາດ, ຫລື ບັນດາອົງການຈັດຕັ້ງສາກົນອື່ນ ໆ.
2. ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕາງປະເທດໝາຍເຖິງບັນດາສະຖາບັນສາກົນທີ່ມີການຈັດຕັ້ງປະຕິບັດວຽກງານທີ່ບໍ່ໄດ້ຕາງໜ້າໃຫ້ລັດຖະບານປະເທດໃດໜຶ່ງ, ຫລື ແມ່ນອົງການຈັດຕັ້ງສາກົນໃດໜຶ່ງທີ່ໄດ້ຖືກສ້າງຕັ້ງຂຶ້ນສະເພາະຕ່າງຫາກຊຶ່ງບໍ່ໄດ້ຂຶ້ນກັບປະເທດບ່ອນທີ່ອົງການຈັດຕັ້ງດັ່ງກ່າວໄດ້ຖືກສ້າງຕັ້ງຂຶ້ນ.
3. ການຄຸ້ມຄອງຄວາມສ່ຽງໄພພິບັດໝາຍເຖິງບັນດາຄວາມພະຍາຍາມທີ່ປະກອບດ້ວຍນະໂຍບາຍກ່ຽວກັບການພັດທະນາທີ່ຄຳນຶງເຖິງຄວາມສ່ຽງໄພພິບັດ, ການປ້ອງກັນໄພພິບັດ, ການຕອບໂຕ້ໃນສະພາບສຸກເສີນ, ແລະ ການຟື້ນຟູປົວແປງຄືນໃໝ່.
4. ສຳນັກງານຄຸ້ມຄອງໄພພິບັດແຫ່ງຊາດ ໃນທີ່ນີ້ເອີ້ນວ່າ NDMA ໝາຍເຖິງສະຖາບັນໜຶ່ງທີ່ບໍ່ຂຶ້ນກັບກົມໃດກົມໜຶ່ງຂອງລັດຖະບານໂດຍສອດຄ່ອງກັບບັນດາຂໍ້ກຳນົດຂອງນິຕິກຳ.
5. ບັນດາສຳນັກງານ ຫລື ສະຖາບັນທີ່ກ່ຽວຂ້ອງກັບການຄຸ້ມຄອງຄວາມສ່ຽງໄພພິບັດ.

**ມາດຕາ 2**

ການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດມີຈຸດປະສົງເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງໄພພິບັດ, ຫລຸດຜ່ອນການນາບຂູ່ຂອງໄພພິບັດ, ບັນເທົາທຸກເພື່ອມະນຸດສະທຳ, ແລະ ເລັ່ງລັດການປົວແປງຄືນໃໝ່ເພື່ອໃຫ້ປະຊາຊົນກັບຄືນສູ່ຊີວິດປົກກະຕິ.

**ມາດຕາ 3**

ລະບຽບການຂອງການເຂົ້າມີສ່ວນຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດຕ້ອງປະກອບດ້ວຍບັນດາມາດຕະການສຳລັບໄລຍະກ່ອນເກີດໄພພິບັດ, ການຕອບໂຕ້ໃນສະພາບສຸກເສີນ, ແລະ ບັນດາມາດຕະການສຳລັບໄລຍະຫລັງເກີດໄພພິບັດ.

**ມາດຕາ 4**

ຫົວໜ້າ NDMA ຕ້ອງມີສິດອຳນາດໃນການກຳນົດການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

## ໝວດ II

## ລະບຽບການສຳລັບການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງລັດຖະບານຂອງຕ່າງປະເທດ

**ມາດຕາ 5**

(1) ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດທີ່ມີຈຸດປະສົງຢາກເຂົ້າຮ່ວມໃນການຄຸ້ມຄອງຄວາມສ່ຽງໄພພິບັດຕ້ອງກະກຽມ:

a. ບົດສະເໜີການເຂົ້າຮ່ວມ;

b. ບົດບັນທຶກຄວາມເຂົ້າໃຈ;

c. ແຜນປະຕິບັດງານ;

(2) ບົດສະເໜີດັ່ງທີ່ໄດ້ກ່າວຢູ່ໃນວັກ (1) ຂໍ້ a ຕ້ອງຖືກກະກຽມໂດຍສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໂດຍການປຶກສາຫາລືກັບພະນັກງານດ້ານການພັດທະນາແຜນງານຂອງ NDMA .

(3) ບົດບັນທຶກຄວາມເຂົ້າໃຈດັ່ງທີ່ກ່າວຢູ່ໃນວັກ (1) ຂໍ້ b ຕ້ອງຖືກກະກຽມຮ່ວມກັນໂດຍ NDMA, ສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໂດຍປະສານສົມທົບກັບບັນດາສຳນັກງານທີ່ຮັບຜິດຊອບວຽກງານການຕ່າງປະເທດ.

(4) ບົດບັນທຶກຄວາມເຂົ້າໃຈດັ່ງທີ່ກຳນົດຢູ່ໃນວັກ (1) ຕ້ອງຖືກກະກຽມໂດຍບັນດາສຳນັກງານ ຫລື ສະຖາບັນ ແລະ ສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໂດຍການປະສານງານກັບ NDMA ໂດຍປະສານສົມທົບກັບບັນດາສຳນັກງານທີ່ຮັບຜິດຊອບວຽກງານການຕ່າງປະເທດ.

**ມາດຕາ 6**

(1) NDMA ແລະ ສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດຕ້ອງຮ່ວມກັນວາງແຜນປະຕິບັດງານດັ່ງທີ່ກ່າວຢູ່ໃນມາດຕາ 5 ວັກ (1) ຂໍ້ c ແລະ ອາດເອົາຫລາຍພາກສ່ວນທີ່ກ່ຽວຂ້ອງ ຫລື ສະຖາບັນຕ່າງ ໆ ເຂົ້າຮ່ວມນຳ.

(2) ການສ້າງແຜນປະຕິບັດງານດັ່ງທີ່ກ່າວຢູ່ໃນມາດຕາ 5 ວັກ (1) ຂໍ້ c ໂດຍບັນດາສຳນັກງານທີ່ກ່ຽວຂ້ອງ ຫລື ສະຖາບັນຕ່າງ ໆ ແລະ ສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດຈະຕ້ອງໄດ້ປະສານງານກັບ NDMA.

**ມາດຕາ 7**

ການນຳໃຊ້ບົດບັນທຶກຄວາມເຂົ້າໃຈ ແລະ ແຜນປະຕິບັດງານດັ່ງທີ່ກ່າວຢູ່ໃນມາດ 5 ແລະ ມາດຕາ 6 ຕ້ອງມີການປະສານງານກັບ NDMA .

**ມາດຕາ 8**

(1) ໃນໄລຍະການຕອບໂຕ້ສະພາບສຸກເສີນ ບັນດາສະຖາບັນສາກົນ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດສາມາດສະໜອງການຊ່ວຍເຫລືອໂດຍກົງໂດຍບໍ່ຈຳເປັນຕ້ອງຜ່ານຂັ້ນຕອນດັ່ງທີ່ກ່າວຢູ່ໃນມາດຕາ 5 ແລະ ມາດຕາ 6.

(2) ການຊ່ວຍເຫລືອຈາກບັນດາສະຖາບັນສາກົນ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງໄດ້ຖືກສະໜອງໄປພ້ອມກັບບັນຊີລາຍຊື່ຂອງບຸກຄະລາກອນ, ວຽກພາລາທິການ, ອຸປະກອນເຄື່ອງໃຊ້ຕ່າງ ໆ, ແລະ ສະຖານທີ່ຂອງການປະຕິບັດກິດຈະກຳ.

(3) ບັນຊີລາຍຊື່ບຸກຄະລາກອນ, ລາຍການວຽກພາລາທິການ, ແລະ ອຸປະກອນຕ່າງ ໆ ດັ່ງທີ່ກ່າວຢູ່ໃນວັກ (2) ອາດຍື່ນລ່ວງໜ້າ, ໃນເວລາທີ່ການຊ່ວຍເຫລືອມາເຖິງ, ຫລື ໄລຍະບໍ່ດົນພາຍຫລັງທີ່ການຊ່ວຍເຫລືອໄດ້ເຂົ້າມາເຖິງ ສປປ ລາວ.

(4) ໂດຍອີງໃສ່ບັນຊີລາຍຊື່ຂອງບຸກຄະລາກອນ, ວຽກພາລາທິການ, ແລະ ອຸປະກອນດັ່ງທີ່ກ່າວຢູ່ໃນວັກ (3) ຫົວໜ້າ NDMA ຕ້ອງຜ່ານອະນຸມັດໂດຍອີງຕາມຄວາມຕ້ອງການທີ່ໄດ້ກຳນົດໄວ້ສຳລັບການຕອບໂຕ້ໄພພິບັດໃນສະພາບສຸກເສີນໃດໜຶ່ງ.

(5) ໃນການສະໜອງສິ່ງຕ່າງ ໆ ດັ່ງທີ່ກ່າວຢູ່ໃນວັກ (4) ຫົວໜ້າຂອງ NDMA ຕ້ອງປະສານງານກັບບັນດາສຳນັກງານ ຫລື ສະຖາບັນທີ່ກ່ຽວຂ້ອງ.

(6) ໃນກໍລະນີທີ່ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃຫ້ການຊ່ວຍເຫລືອໃນຮູບແບບເປັນເງິນ ເງິນຊ່ວຍເຫລືອດັ່ງກ່າວຈະຕ້ອງຖືກສົ່ງໂດຍກົງໃຫ້ NDMA.

(7) ການສະໜອງການຊ່ວຍເຫລືອດ້ານການເງິນໃຫ້ແກ່ກອງທຶນສຸກເສີນໄພພິບັດໃດໜຶ່ງດັ່ງທີ່ກ່າວຢູ່ໃນວັກ (6) ຕ້ອງໄດ້ຖືກຄຸ້ມຄອງຢ່າງສອດຄ່ອງກັບຂໍ້ກຳນົດທາງດ້ານນິຕິກຳ.

**ມາດຕາ 9**

ການປຸກລະດົມເອົາບຸກຄະລາກອນ, ການຊ່ວຍເຫລືອດ້ານພາລາທິການ, ແລະ / ຫລື ວັດຖຸອຸປະກອນດັ່ງທີ່ກ່າວຢູ່ໃນມາດຕາ 8 ວັກ (2), ວັກ (3), ແລະ (4) ຕ້ອງສາມາດເຂົ້າເຖິງໄດ້ໂດຍສອດຄ່ອງກັບບັນດາຂໍ້ກຳນົດທາງນິຕິກຳ.

**ໝວດ III**

**ການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດ**

**ມາດຕາ 10**

(1) ການມີສ່ວນຮ່ວມຂອງບັນດາສະຖາບັນສາກົນ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດໃນໄລຍະກ່ອນເກີດໄພພິບັດ ແລະ ໄລຍະຫລັງເກີດໄພພິບັດຕ້ອງໄດ້ຖືກລວມເຂົ້າໃນບັນດານະໂຍບາຍຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງໄດ້ຢູ່ພາຍໃຕ້ການປະສານງານຂອງ NDMA.

(3) ການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນການຄຸ້ມຄອງຄວາມສ່ຽງໄພພິບັດໃນໄລຍະຕອບໂຕ້ກັບສະພາບສຸກເສີນຕ້ອງຢູ່ໃນຂອບເຂດການສັ່ງການປະຕິບັດງານຈາກ NDMA.

**ມາດຕາ 11**

(1) ລັດຖະບານຕ້ອງຮັບປະກັນໃນການສະໜອງການປົກປ້ອງພະນັກງານກຳມະກອນຂອງບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງ ປະເທດທີ່ກຳລັງປະຕິບັດວຽກງານໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ການປົກປ້ອງດັ່ງທີ່ໄດ້ກ່າວຢູ່ໃນວັກ (1) ຕ້ອງໄດ້ຖືກສະໜອງໂດຍສອດຄ່ອງກັບບັນດາຂໍ້ກຳນົດທາງນິຕິກຳ.

**ມາດຕາ 12**

(1) ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງບໍ່ສັງກັດລັດຖະບານຂອງຕ່າງປະເທດອາດເຂົ້າຮ່ວມການຄຸ້ມຄອງໄພພິບັດເປັນແຕ່ລະອົງການ, ຮ່ວມກັນ, ແລະ / ຫລື ປະຕິບັດແບບປະສານສົມທົບກັບຄູ່ຮ່ວມງານໃດໜຶ່ງຂອງ ສປປ ລາວ.

(2) ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງບໍ່ສັງກັດລັດຖະບານຂອງຕ່າງປະເທດທີ່ໃຫ້ການຊ່ວຍເຫລືອຢ່າງຄົບຖ້ວນຢູ່ໃນຮູບແບບການປະກອບສ່ວນດ້ານບຸກຂະລາກອນຄົນຕ່າງປະເທດ, ວຽກພາລາທິການ ແລະ / ຫລື ວັດຖຸອຸປະກອນດັ່ງທີ່ກ່າວຢູ່ໃນມາດຕາ 8 ອາດເຂົ້າຮ່ວມໃນບັນດາກິດຈະກຳຮ່ວມກັນໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

(3) ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດທີ່ໃຫ້ການຊ່ວຍເຫລືອແບບບໍ່ຄົບຖ້ວນຄືດັ່ງທີ່ກ່າວຢູ່ໃນວັກ (2) ອາດເຂົ້າຮ່ວມການຄຸ້ມຄອງຄວາມສ່ຽງໄພພິບັດແບບເຮັດຮ່ວມກັນ, ແລະ / ຫລື ເຂົ້າຮ່ວມເປັນສ່ວນໜຶ່ງຂອງສະຖາບັນສາກົນອື່ນ ໆ ບັນດາອົງການທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດ.

(4) ສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດດັ່ງທີ່ກ່າວຢູ່ໃນວັກ (2) ແລະ ວັກ (3) ອາດເຂົ້າຮ່ວມການຄຸ້ມຄອງຄວາມສ່ຽງໄພພິບັດແບບປະສານສົມທົບກັບຄູ່ຮ່ວມງານໃດໜຶ່ງຂອງ ສປປ ລາວ, ບໍ່ວ່າຈະປະສານສົມທົບກັບບັນດາສຳນັກງານ / ຫລື ສະຖາບັນທີ່ກ່ຽວຂ້ອງ ຫລື ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ມີວິໃສ່ທັດ ແລະ ພັນທະກິດຄ້າຍຄືກັນ.

**ມາດຕາ 13**

(1) ບັນດາສະຖາບັນສາກົນ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດດັ່ງທີ່ກ່າວຢູ່ໃນມາດຕາ 12 ອາດໄດ້ຮັບການອຳນວຍຄວາມສະດວກສຳລັບການປະຕິບັດມາດຕະການຕ່າງ ໆ ໃນການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ການອຳນວຍຄວາມສະດວກດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງໃຫ້ສອດຄ່ອງກັບບັນດາຂໍ້ກຳນົດຂອງນິຕິກຳ.

**ມາດຕາ 14**

(1) ບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດທີ່ເຂົ້າຮ່ວມການຄຸ້ມຄອງຄວາມສ່ຽງໄພພິບັດຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມກິດຈະກຳທີ່ກ່ຽວຂ້ອງກັບການເມືອງ ຫລື ການປ້ອງກັນຄວາມສະຫງົບແຫ່ງຊາດ.

(2) ເພື່ອກຳນົດໃຫ້ຮູ້ວ່າກິດຈະກຳໃດໜຶ່ງກ່ຽວຂ້ອງກັບບັນຫາການເມືອງ ຫລື ການປ້ອງກັນຄວາມສະງົບແຫ່ງຊາດດັ່ງທີ່ກ່າວຢູ່ໃນວັກ (1) ຫົວໜ້າ NDMA ຕ້ອງປະສານງານກັບບັນດາສຳນັກງານທີ່ມີຄວາມຮັບຜິດຊອບ ແລະ ໜ້າທີ່ເກັບກຳຂໍ້ມູນປິດລັບ ແລະ ການປ້ອງກັນຄວາມສະຫງົບແຫ່ງຊາດ.

(3) ບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດທີ່ເຂົ້າຮ່ວມໃນການຄຸ້ມຄອງໄພພິບັດຈະຕ້ອງພິຈາລະນາ ແລະ ເຄົາລົບ ຂະນົບທຳນຽມທາງດ້ານສັງຄົມ ແລະ ວັດທະນາທຳຂອງຊຸມຊົນທ້ອງຖິ່ນ.

## ໝວດ IV
## ການຊີ້ນຳ ແລະ ການລາຍງານ

### ມາດຕາ 15

(1) NDMA ຕ້ອງຊີ້ນຳການເຂົ້າຮ່ວມຂອງບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດໃນວຽກງານການຄຸ້ມຄອງຄວາມສ່ຽງໄພພິບັດ.

(2) ການຊີ້ນຳດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງໄດ້ຖືກປະຕິບັດເພື່ອສັງເກດ ແລະ ຕິດຕາມການເຄື່ອນໄຫວຕ່າງ ໆ.

(3) ຂໍ້ກຳນົດກ່ຽວກັບລະບຽບການໃນການຊີ້ນຳດັ່ງທີ່ກ່າງຢູ່ໃນວັກ (1) ຈະຕ້ອງຖືກລະບຸອອກໂດຍລະບຽບການຂອງ NDMA .

### ມາດຕາ 16

(1) ບັນດາສະຖາບັນສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດຕ້ອງສົ່ງບົດລາຍງານກ່ຽວກັບການປະຕິບັດຄວາມຮັບຜິດຊອບໃນການປະຕິບັດກິດຈະກຳຕ່າງ ໆ ຂອງເຂົາເຈົ້າໃຫ້ແກ່ NDMA ເປັນແຕ່ລະໄລຍະ, ໃນເວລາສິ້ນສຸດໄລຍະການປະຕິບັດງານ ຫລື ໃນເວລາໃດກໍ່ໄດ້ໂດຍອີງຕາມການຮ້ອງຂໍຂອງ NDMA.

(2) NDMA ຕ້ອງເຜີຍແຜ່ບົດລາຍງານດັ່ງທີ່ກ່າວຢູ່ໃນວັກ (1) ຕໍ່ສາທາລະນະຊົນໃນລັກສະນະທີ່ໂປ່ງໃສ່.

(3) ຂໍ້ກຳນົດກ່ຽວກັບລະບຽບການໃນການລາຍງານ ແລະ ເນື້ອໃນຂອງການລາຍງານດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງຖືກລະບຸອອກໂດຍຫົວໜ້າ NAMD.

## ໝວດ V
## ຂໍ້ກຳນົດອື່ນ ໆ

### ມາດຕາ 17

(1) ໃນກໍລະນີໄດ້ຮັບການຊ່ວຍເຫລືອສໍາລັບການຄຸ້ມຄອງໄພພິບັດຈາກຕ່າງປະເທດ ຫົວໜ້າຂອງ NDMA ຕ້ອງປຶກສາຫາລື ແລະ ປະສານງານກັບ ລັດຖະມົນຕີທີ່ຮັບຜິດຊອບວຽກງານຕ່າງປະເທດ.

(2) ບັນດາຂໍ້ກໍານົດດັ່ງທີ່ກ່າວຢູ່ໃນວັກ (1) ຕ້ອງສອດຄ່ອງກັບບັນດາຂໍ້ກໍານົດຂອງນິຕິກໍາ.

## VI
## ຂໍ້ບັນຍັດສຸດທ້າຍ

### ມາດຕາ 18
ສະມາຊິກທັງໝົດຂອງຄະນະກໍາມະການຄຸ້ມຄອງໄພພິບັດແຫ່ງຊາດ, ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອໍານາດການປົກຄອງແຂວງ ແລະ ທຸກພາກສ່ວນທີ່ໄດ້ຖືກແຕ່ງຕັ້ງຕ້ອງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 19
ດໍາລັດຂອງລັດຖະບານສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ມະຕິຕົກລົງລັດຖະມົນຕີ ສະບັບຮ່າງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ:...(.../ ກຮສສ)

ນະຄອນຫລວງວຽງຈັນ, ວັນທີ: ...

**ມະຕິຕົກລົງວ່າດ້ວຍ**

**ການກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງໄພພິບັດແຫ່ງຊາດ**

**ບ່ອນອີງ:**

ດຳລັດນາຍົກລັດຖະມົນຕີເລກທີ 158 ລົງວັນທີ 23 ສິງຫາ 1999 ວ່າດ້ວຍການສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດແຫ່ງ ສປປ ລາວ; ມະຕິຕົກລົງຂອງກະຊວງແຮງການ ແລະ ສະຫວັດດີການ ສັງຄົມວ່າດ້ວຍການກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ NDMC ເລກທີ 097/ກຮສສ, ລົງວັນທີ 30 ມິຖຸນາ 2000; ແຜນຍຸດທະສາດກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດໃນ ສປປ ລາວ ສຳລັບໄລຍະຮອດປີ 2020 , 2010 ແລະ ແຜນປະຕິບັດງານ (2003 - 2005) ເລກທີ 1139 / ກຮສສ, ລົງວັນທີ 18 ເມສາ 2003.

ໃນນາມປະທານຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມຕົກລົງອອກຂໍ້ກຳນົດດັ່ງຕໍ່ໄປນີ້:

## ພາກ I

## <u>ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງປະທານ NDMC</u>

ມາດຕາ 1: ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງປ້ອງກັນຊາດປະຕິບັດໜ້າທີ່ເປັນປະທານຂອງ NDMC ແລະ ສົ່ງລາຍງານເຖິງປະທານປະເທດແຫ່ງ ສປປ ລາວ ກ່ຽວກັບການສ້າງຄວາມພ້ອມຕ້ານໄພພິບັດ, ມາດຕະການຫລຸດຜ່ອນໄພພິບັດ, ການເຕືອນໄພລ່ວງໜ້າ, ການຕອບໂຕ້, ແລະ ການກໍ່ສ້າງ ແລະ ປົວແປງຄືນໃໝ່ສໍາລັບເຫດການທີ່ເກີດຈາກໄພພິບັດທາງທໍາມະຊາດ ແລະ ເກີດຈາກມະນຸດສ້າງຂຶ້ນ.

1.1 ພັດທະນາແຜນການສ້າງຄວາມພ້ອມ ແລະ ຕອບໂຕ້ໄພພິບັດສໍາລັບການເຂົ້າຮ່ວມຂອງປະຊາຊົນ, ກໍາລັງປ້ອງກັນຊາດ ແລະ ບັນດາສໍານັກງານຝ່າຍມະນຸດສະທໍາໃນຕອບໂຕ້ ແລະ ບັນເທົາທຸກຢູ່ໃນພາກພື້ນຕ່າງ ໆ ໃນຂອບເຂດທົ່ວປະເທດ.

1.2 ປະສານງານກັບບັນດາກິດຈະກໍາຫລຸດຜ່ອນຄວາມສ່ຽງໃນໄລຍະຕ່າງ ໆ ພາຍຫລັງການເກີດໄພພິບັດ ແລະ ຊ່ວຍເຈົ້າໜ້າທີ່ຝ່າຍພົນລະເຮືອນໃນການກໍ່ສ້າງ ແລະ ຟື້ນຟູຄືນໃໝ່ຂອງສິ່ງອໍານວຍຄວາມສະດວກຂອງພື້ນຖານໂຄງຮ່າງ.

1.3 ເປັນປະທານກອງປະຊຸມໄຕມາດຕ່າງ ໆ ເພື່ອທົບທວນຄືນແຜນການກຽມຄວາມພ້ອມຕ້ານໄພພິບັດທໍາມະຊາດ ແລະ ກອງປະຊຸມກ່ຽວກັບເຫດການໄພພິບັດຕ່າງ ໆທີ່ມີຄວາມຈໍາເປັນເພື່ອເຮັດການປະສານງານສໍາລັບການປະຕິບັດການດ້ານຕ່າງ ໆ.

## ພາກ II

## <u>ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຮອງປະທານ ແລະ ສະມາຊິກ</u>

ມາດຕາ 2: ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມເປັນສະມາຊິກຂອງ NDMC ແລະ ມີຄວາມຮັບຜິດຊອບໃນການຄຸ້ມຄອງຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດເພື່ອຈັດຕັ້ງ ແລະ ປະສານງານສໍາລັບການກຽມຄວາມພ້ອມ, ການປ້ອງກັນ, ມາດຕະການຫລຸດຜ່ອນຄວາມສ່ຽງ ແລະ ກິດຈະກໍາຟື້ນຟູປົວແປງຕ່າງ ໆ ໃນໄລຍະກ່ອນການເກີດໄພພິບັດ.

2.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

2.2 ປະຕິບັດໜ້າທີ່ເປັນສູນກາງສຳລັບການຄຸ້ມຄອງຂໍ້ມູນກ່ຽວກັບໄພພິບັດ, ການປະເມີນສະພາບການ, ການເກັບກຳ ແລະ ຜະລິດບົດລາຍງານຕ່າງ ໆ ປະຈຳປີ.

2.3 ປະສານງານ ແລະ ຈັດຕັ້ງການຊ່ວຍເຫລືອບັນເທົາທຸກ, ການຊ່ວຍເຫລືອທີ່ພັກອາໄສ ແລະ ຊັບພະຍາກອນອື່ນ ໆ ພາຍຫລັງເຫດການໄພພິບັດຕ່າງ ໆ.

ມາດຕາ 3: ລັດຖະມົນຕີວ່າການກະຊວງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ - ສຳນັກງານນາຍົກລັດຖະມົນຕີ ປະຕິບັດໜ້າທີ່ເປັນຮອງປະທານຂອງ NDMC ແລະ ມີຄວາມຮັບຜິດຊອບໃນການກະກຽມແຜນການຕ້ານໄພນ້ຳຖ້ວມໃນຂອບເຂດທົ່ວປະເທດ.

3.1 ແຕ່ງຕັ້ງຈຸດປະສານງານສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

3.2 ທົບທວນຄືນ ແລະ ອະນຸມັດບັນດາແຜນການຄວບຄຸມ ຫລື ປ້ອງກັນໄພນ້ຳຖ້ວມທີ່ໄດ້ຖືກສ້າງຂຶ້ນໂດຍພາກສ່ວນຕ່າງ ໆ ຂອງລັດຖະບານ ແລະ ບັນດາສຳນັກງານຕ່າງ ໆ ຢູ່ຂັ້ນສູນກາງ ແລະ ອອກຄຳແນະນຳກ່ຽວກັບບັນດາຫລັກການສຳລັບການຄວບຄຸມບັນດາອ່າງເກັບນ້ຳເພື່ອຄວບຄຸມສະພາບໄພນ້ຳຖ້ວມ.

3.3 ປະເມີນຜົນ ແລະ ຕິດຕາມຄວາມຄືບໜ້າຂອງແຜນການປ້ອງກັນໄພນ້ຳຖ້ວມແຫ່ງຊາດ ແລະ ການຈຈັດຕັງປະຕິບັດ ແລະ ການຕິດຕາມການຈັດຕັ້ງປະຕິບັດຂອງອຳນາດການປົກຄອງແຂວງສຳລັບແຜນການປ້ອງກັນໄພນ້ຳຖ້ວມແຫ່ງຊາດ.

ມາດຕາ 4: ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບເຮັດໜ້າທີ່ເປັນຮອງທານຂອງ NDM ແລະ ມີຄວາມຮັບຜິດຊອບໃນການປະສານງານສ ໍາລັບກສຍເຂົ້າຮ່ວມໂດຍກົງຂອງທີມງານທາງການແພດໃນການປະຕິບັດງານສຸກເສີນເພື່ອໃຫ້ການຊ່ວຍເຫລືອປະຖົມພະຍາບານ ແລະ ແລສຸຂະພາບ ແລະ ການອອກໃບຢັ້ງຢືນການເສຍຊີວິດຂອງຜູ້ທີ່ຖືກເຄາະຮ້າຍຈາກໄພພິບັດ.

4.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

4.2 ຈັດເກັບມ້ຽນຢາປົວພະຍາດ ແລະ ວັດຖຸສິ່ງຂອງຕ່າງ ໆ ເພື່ອນໍາໃຊ້ໃນເຫດການໄພພິບັດຕ່າງ ໆ.

4.3 ຮັບຜິດຊອບການຮັກສາອະນາໄມ ແລະ ຄວບຄຸມພະຍາດຕິດຕໍ່.

ມາດຕາ 5: ລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້ເຮັດໜ້າທີ່ເປັນຮອງປະທານຂອງ NDMC ແລະ ມີຄວາມຮັບຜິດຊອບໃນການສະໜອງເມັດພືດສໍາລັບການປູກຝັ່ງເພື່ອບັນເທົາທຸກ ແລະ ຊ່ວຍເຫລືອກ່ຽວກັບການລ້ຽງສັດໃຫ້ແກ່ບັນດາຜູ້ເຄາະຮ້າຍຈາກໄພພິບັດ.

5.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

5.5 ພັດທະນາແຜນງານສໍາລັບການຄົ້ນຄວ້າທີ່ກ່ຽວຂ້ອງກັບການວິເຄາະສິ່ງອັນຕະລາຍ ແລະ ຜົນກະທົບຂອງສິ່ງອັນຕະລາຍໃນວຍກງານກະສິກໍາ.

5.3 ອອກຄໍາສັ່ງໃຫ້ພະນັກງານຂອງກະຊວງໃຫ້ເຮັດກິດຈະກໍາການສ້າງຈິດສໍານຶກຂອງບັນດາຊຸມຊົນກ່ຽວກັບຄວາມສໍາຄັນຂອງການຫລຸດຜ່ອນຄວາມສ່ຽງໄພພິບັດຢູ່ໃນຂະແໜງກະສິກໍາ.

ມາດຕາ 6: ລັດຖະມົນຕີວ່າການກະຊວງການຕ່າງປະເທດເປັນສະມາຊິກຂອງ NDMC ແລະ ໃນກໍລະນີເກີດເຫດການຫາຍານະ ຫລື ເກີດໄພພິບັດທີ່ສ້າງຄວາມສູນເສຍຢ່າງຮຸນແຮງ ຕ້ອງຊອກຫາການຊ່ວຍເຫລືອຈາກສາກົນພາຍຫລັງທີ່ໄດ້ຮັບອະນຸຍາດຈາກລັດຖະບານແຫ່ງ ສປປ ລາວ

6.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

6.2 ພັດທະນາລະບຽບການ ແລະ ຂັ້ນຕອນໃນການດໍາເນີນງານເພື່ອຕິດຕາມຢ່າງໄວວາໃນການຮ້ອງຂໍການຊ່ວຍເຫລືອ ແລະ ການອໍານວຍຄວາມສະດວກໃນການນໍາໃຊ້ທີມງານຕອບໂຕ້ໄພພິບັດຂອງສາກົນ ແລະ ໃນການຮັບການຊ່ວຍເຫລືອບັນເທົາທຸກໃນກໍລະນີສະພາບສຸກເສີນໃດໜຶ່ງ.

6.3 ພັດທະນາ ແລະ ຮັກສາໃຫ້ມີຈຸດປະສານງານຕ່າງ ໆ ຂອງບັນດາສະຖານທູດສໍາລັບການກະກຽມຄວາມພ້ອມ ແລະ ປະສານງານກັບບັນດາອົງການຈັດຕັ້ງທາງດ້ານວິຊາການຂອງສາກົນ ແລະ ສໍານັກງານຕ່າງ ໆ ໃນເຄືອຄ່າຍອົງການສະຫະປະຊາຊາດເພື່ອຮັບການຊ່ວຍເຫລືອທາງດ້ານວິຊາການ ແລະ ການເງິນສໍາລັບການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ການສ້າງຄວາມພ້ອມໂດຍ

ປະສານງານ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫລືອເພື່ອຈັດຕັ້ງການຮ້ອງຂໍການຊ່ວຍເຫລືອຢ່າງໄວວາໃນກໍລະນີເກີດໄພພິບັດ.

ມາດຕາ 7: ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນເປັນສະມາຊິກຂອງ NDMC ແລະ ມີຄວາມຮັບຜິດຊອບໃນການຮັບປະກັນເຮັດໃຫ້ມີຊັບພະຍາກອນທີ່ມີການຈັດສັນສະເພາະ ແລະ ພຽງພໍເພື່ອປະຕິບັດບັນດາແຜນການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ສຳລັບກິດຈະກຳຕ່າງ ໆ ຢູ່ໃນທຸກລະດັບການປົກຄອງ.

7.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດເພື່ອປະສານງານກັບ NDMO ແລະ ຄະນະກຳມະການຂັ້ນແຂວງ.

7.2 ຮັບປະກັນໃຫ້ມີນະໂຍບາຍ ແລະ ກອບວຽກທາງນິຕິກຳລະດັບຊາດ.

7.3 ຮັບປະກັນເຮັດໃຫ້ບັນດາມາດຕະການຫລຸດຜ່ອນຄວາມສ່ຽງໄພພິບັດໄດ້ຖືກເຊື່ອມສານເຂົ້າໃນບັນດາຂະບວນການຟື້ນຟູ ແລະ ປົວແປງຄືນໃໝ່ສຳລັບໄລຍະພາຍຫລັງເກີດໄພພິບັດ.

ມາດຕາ 8. ລັດຖະມົນຕີກະຊວງສາທາລະນະສຸກເປັນສະມາຊິກຂອງ NDMC ແລະ ຮັບຜິດຊອບສ້າງ ແລະ ປະຕິບັດ ແຜນກຽມຄວາມພ້ອມຕໍ່ໄພພິບັດຂອງໂຮງໝໍ ໂດຍມີສິ່ງອຳນວຍຄວາມສະດວກທີ່ສາມາດຮອງຮັບສະພາບສຸກເສີນ ແລະ ມາດຕະຖານດຳເນີນງານ ເພື່ອຕິດຕາມ ແລະ ຍົກຍ້າຍຜູ້ເຄາະຮ້າຍຈຳນວນຫລວງຫລາຍ ທີ່ເປັນຜົນເນື່ອງຈາກເຫດການໄພພິບັດທີ່ຮຸນແຮງ.

8.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

8.2 ພັດທະນາບຸກຄະລາກອນດູແລສຸຂະພາບ ທີ່ມີວິຊາການຕອບໂຕ້ໄພພິບັດ ລວມທັງການປັບປຸງການສຶກສາສຳລັບພະຍາບານ, ແພດໃນຍາມສຸກເສີນ, ແລະ ທ່ານໝໍ ເພື່ອເພີ່ມຄວາມຮູ້ ແລະ ສ້າງຄວາມພ້ອມໃນການຄຸ້ມຄອງໄພພິບັດ.

8.3 ສ້າງລະບົບດູແລສຸຂະພາບສຳລັບໄລຍະພາຍຫລັງເກີດໄພພິບັດ ໂດຍການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບພັດທະນາຂັ້ນເມືອງ ແລະ ສ້າງຕັ້ງລະບົບທີ່ມີຄວາມພ້ອມລະດັບສູງ ແລະ ມີບັນຊີລາຍຊື່ບຸກຄະລາກອນທີ່ສາມາດປຸກລະດົມມາຮ່ວມວຽກໄດ້ໃນເມື່ອໄດ້ຮັບສັນຍານເຕືອນໄພ ຫລື ໄດ້ຮັບລາຍງານຜົນກະທົບຂອງໄພພິບັດ.

ມາດຕາ 9. ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນສະມາຊິກຂອງ NDMC ແລະຮັບຜິດຊອບວາງແຜນ ແລະ ຈັດຕັ້ງປະຕິບັດ ແຜນການຕ້ານໄພພິບັດ ໂດຍຮ່ວມມື ກັບຜູ້ຕາງໜ້າອື່ນ ໆ ຂອງ NDMC.

9.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານ ກັບ NDMO ແລະ ບັນດາຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

9.2 ເຂົ້າຮ່ວມກິດຈະກໍາປຸກຈິດສໍານຶກຂອງປະຊາຊົນທີ່ຈະເພີ່ມຄວາມສາມາດໃຫ້ ສປປ ລາວ ເພື່ອ ຫລຸດຜ່ອນຄວາມສ່ຽງ, ກະກຽມ ແລະ ຕອບໂຕ້ຜົນກະທົບຈາກສິ່ງອັນຕະລາຍ.

9.3 ຊ່ວຍເຫລືອປະຊາຊົນໃນການຟື້ນຟູ ແລະ ປັບປຸງສິ່ງອໍານວຍຄວາມສະດວກ, ການທໍາມາຫາກິນ, ເງື່ອນໄຂການດໍາລົງຊີວິດຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ລວມທັງ ຄວາມ ພະຍາຍາມຫລຸດຜ່ອນປັດໃຈສ່ຽງຕ່າງ ໆ ຈາກໄພພິບັດ.

ມາດຕາ 10 ລັດຖະມົນຕີກະຊວງສຶກສາເປັນສະມາຊິກຂອງ NDMC ແລະ ຮັບຜິດຊອບການຍົກຍ້າຍນັກຮຽນ ແລະ ປະຊະຊາຊົນທົ່ວໄປ ໃຫ້ໄປຢູ່ສະຖານທີ່ພັກເຊົາສຸກເສີນໃນໂຮງຮຽນ ໃນຍາມເກີດໄພພິບັດ.

10.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານ ກັບ NDMO ແລະ ບັນດາຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

10.2 ເຊື່ອມສານແນວຄວາມຄິດການຄຸ້ມຄອງໄພພິບັດ ເຂົ້າໃນແຜນງານການສຶກສາໃນໂຮງຮຽນ, ຈັດ ຕັ້ງການຝຶກອົບຮົມການຄຸ້ມຄອງໄພພິບັດ ກ່ຽວກັບການດໍາລົງຊີວິດກັບທໍາມະຊາດທີ່ມີອັນຕະລາຍ ແລະ ຄຸ້ມຄອງສິ່ງແວດລ້ອມ ເພື່ອສິດສອນພະນັກງານ ແລະ ນັກຮຽນ.

10.3 ກໍານົດ ແລະ ເກັບບັນທຶກຈໍານວນສະຖາບັນການສຶກສາທີ່ມີຄວາມສ່ຽງ ແລະ ພື້ນຖານໂຄງລ່າງ ຂອງກະຊວງ ທີ່ຢູ່ໃນເຂດທີ່ຄວາມສ່ຽງ ແລະ ຈັດສັນງົບປະມານ ສໍາລັບການກໍ່ສ້າງທີ່ປອດໄພ ກວ່າເກົ່າ ແລະ ສໍາລັບກິດຈະກໍາສ້າງຄວາມພ້ອມຕ້ານໄພພິບັດ.

ມາດຕາ 11 ຫົວໜ້າກົມຈັດຕັ້ງພະນັກງານ ຂອງກະຊວງປ້ອງກັນຊາດ ເປັນສະມາຊິກ ຂອງ NDMC ແລະ ໃຊ້ຊັບພະຍາກອນຝ່າຍທະຫານ ໃນການບັນເທົາທຸກຜູ້ລອດຊີວິດ ໂດຍການຮ່ວມມືກັບ ພາກສ່ວນ ອື່ນ ທີ່ກ່ຽວຂ້ອງ.

11.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານ ກັບ NDMO ແລະ ບັນດາຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

11.2 ພັດທະນາແຜນການກຽມຄວາມພ້ອມ ແລະ ການຕອບໂຕ້ ໄພພິບັດ ສໍາລັບການເຂົ້າຮ່ວມຂອງ ທະຫານ ໃນວຽກງານຕອບໂຕ້ ແລະ ຊ່ວຍບັນເທົາທຸກ ໃນຫລາຍພາກພື້ນພາຍໃນປະເທດ ແລະ ປະສານງານເຮັດກິດຈະກໍາຫລຸດຜ່ອນຄວາມສ່ຽງໃນຫລາຍໄລຍະຫລັງຈາກເກີດໄພພິບັດ.

11.3 ຊ່ວຍຝ່າຍປົກຄອງພົນລະເຮືອນ ໃນການກໍ່ສ້າງຄືນໃໝ່ ແລະ ຟື້ນຟູພື້ນຖານໂຄງລ່າງ ຕາມ ຄວາມຈໍາເປັນ.

ມາດຕາ 12 ຫົວໜ້າຫ້ອງວ່າການກະຊວງພະລັງງານ ແລະ ບໍ່ແຮ່ ເປັນສະມາຊິກ ຂອງ NDMC ແລະ ອອກ ມະຕິຄໍາສັ່ງທີ່ຈໍາເປັນຢ່າງລະອຽດ ແກ່ພະນັກງານທີ່ກ່ຽວຂ້ອງກ່ຽວກັບໜ້າທີ່ ແລະ ຄວາມ ຮັບຜິດຊອບຂອງເຂົາເຈົ້າ ໃນການກຽມຄວາມພ້ອມຕ້ານໄພພິບັດ ແລະ ປະຕິບັດວຽກງານ

ພາຍຫລັງໄພພິບັດເກີດຂື້ນແລ້ວ.

12.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

12.2 ປະຕິບັດແຜນງານຫລຸດຜ່ອນຄວາມສ່ຽງເພື່ອຮັບປະກັນຄວາມສາມາດຕ້ານທານຂອງພື້ນຖານໂຄງລ່າງຕໍ່ສິ່ງອັນຕະລາຍ ແລະ ເພື່ອຫລຸດຜ່ອນຄວາມສ່ຽງຂອງການບໍລິການ ແລະ ຂອງລະບົບຕ່າງໆ ແລະ ວາງແຜນເພື່ອຮັບປະກັນບໍ່ໃຫ້ມີການລົບກວນການບໍລິການ ໃນໄລຍະທີ່ເກີດໄພອັນຕະລາຍ.

12.3 ອອກຄຳສັ່ງລະອຽດຕໍ່ພະນັກງານ ແລະ ກຳມະກອນກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ໃນໄລຍະກຽມຄວາມພ້ອມ, ໄລຍະເກີດໄພພິບັດ ແລະ ໄລຍະຫລັງເກີດໄພພິບັດທາງທຳມະຊາດ.

ມາດຕາ 13 ຫົວໜ້າຫ້ອງວ່າການ ກະຊວງອຸດສະຫະກຳ ແລະ ການຄ້າ ເປັນສະມາຊິກຂອງ NDMC ແລະ ພັດທະນາມາດຕະຖານຄວາມປອດໄພສຳລັບໂຮງງານອຸດສະຫະກຳ ແລະ ກິດຈະກຳການປຸງແຕ່ງ; ຄຸ້ມຄອງມາດຕະຖານຄວາມປອດໄພ ແລະ ການໃຊ້ເຄມີ, ສານພິດ ໃນອຸດສະຫະກຳ ແລະ ຄວບຄຸມຜົນກະທົບຂອງມັນຕໍ່ສິ່ງແວດລ້ອມ ແລະ ສາທາລະນະຊົນ.

13.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

13.2 ເຊື່ອມສານເອົາຫລັກການ ແລະ ວິທີການທີ່ດີໃນການຄຸ້ມຄອງໄພພິບັດ ເຂົ້າໃນຂະບວນການວາງແຜນພັດທະນາຂອງກະຊວງ ແລະ ເຂົ້າໃນແຜນງານຄົ້ນຄວ້າ ທີ່ກ່ຽວຂ້ອງກັບ ການວິເຄາະ ສິ່ງທີ່ເປັນໄພອັນຕະລາຍ.

13.3 ຮັບປະກັນເຮັດໃຫ້ປະເດັນການຄຸ້ມຄອງຄວາມສ່ຽງໄພພິບັດໄດ້ຖືກພິຈະລະນາ ໃນເມື່ອມີການກໍ່ສ້າງ ໂຮງານ ແລະ ອຸດສະຫະກຳໃໝ່.

ມາດຕາ 14 ຫົວໜ້າກົມງົບປະມານ ກະຊວງການເງິນ ເປັນສະມາຊິກ ຂອງ NDMC ແລະ ຮັບຜິດຊອບກອງທຶນແຮສຳຮອງ ແລະ ສະໜອງທຶນລັດຖະບານ ສຳລັບກິດຈະກຳຕ້ານໄພພິບັດ ພາຍຫລັງທີ່ໄດ້ຮັບອະນຸມັດຈາກ NDMC.

14.1 ແຕ່ງຕັ້ງຈຸດປະສານງານຂອງກະຊວງ ສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກຳມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

14.2 ສະເໜີ ໃນນາມຕາງໜ້າໃຫ້ NDMC ເພື່ອຂໍທຶນລັດຖະບານສຳລັບກິດຈະກຳການຫລຸດຜ່ອນຄວາມສ່ຽງ ແລະ ການຟື້ນຟູ ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.

ມາດຕາ 15. ຫ້ອງການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເປັນສະມາຊິກຂອງ NDMC ແລະ ແຈ້ງຂໍ້ມູນເຕືອນໄພລ່ວງໜ້າຢ່າງທັນການ, ປະຕິບັດງານໃນສະພາບສຸກເສີນ, ແລະ ແຈ້ງຂໍ້ມູນລ່ວງໜ້າເພື່ອຫລຸດຜ່ອນຄວາມສ່ຽງ ໂດຍຜ່ານຫລາຍຮູບແບບຂອງສື່ມວນຊົນ.

15.1 ແຕ່ງຕັ້ງບັນດາຈຸດປະສານງານຂອງກະຊວງດັ່ງກ່າວສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກຳມະການ ລະດັບແຂວງ, ເມືອງ ແລະ ບ້ານ.

15.2 ປະສານງານກັບ NDMA ເພື່ອຮັບຂໍ້ມູນຂ່າວສານກ່ຽວກັບຄວາມສ່ຽງຂອງໄພພິບັດ ແລະ ຮັບຮູ້ຍຸດທະສາດການກຽມຄວາມພ້ອມ ໂດຍສະເພາະແມ່ນ ການກຽມຄວາມພ້ອມຂອງຊຸມຊົນ.

15.3 ສົ່ງເສີມແຜນງານການສ້າງຈິດສຳນຶກ ແລະ ການກະຈາຍຂໍ້ມູນຜ່ານສື່ມວນຊົນເພື່ອໃຫ້ຄວາມຮູ້ ແລະ ນຳໃຊ້ສິ່ງພິມຕ່າງ ໆ ກ່ຽວກັບ ການປົກປ້ອງ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ.

ມາດຕາ 16. ຫ້ອງການໄປສະນີ ແລະ ໂທລະຄົມມະນາຄົມ ຕ້ອງເຮັດໜ້າທີ່ໃນຖານະທີ່ເປັນສະມາຊິກຂອງ NDMC ແລະ ກະຈ່າຍຂ່າວໃຫ້ບຸກຄົນ ແລະ ຄອບຄົວ ເພື່ອຊ່ວຍຊີວິດ ແລະ ການດຳລົງຊີວິດຂອງປະຊາຊົນ.

16.1 ແຕ່ງຕັ້ງບັນດາຈຸດປະສານງານຂອງກົມດັ່ງກ່າວສຳລັບກາສານຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກຳມະການ ລະດັບແຂວງ, ເມືອງ ແລະ ບ້ານ.

16.2 ອອກແບບ ແລະ ຈັດຕັ້ງປະຕິບັດ ແຜນງານປຸກຈິດສຳນຶກ ແລະ ໃຫ້ຄວາມຮູ້ແກ່ປະຊາຊົນ ໂດຍຮ່ວມມືກັບ NDMO ລວມທັງການປ້ອງກັນບຸກຄົນ, ຄອບຄົວ ແລະ ຊຸມຊົນ, ສ້າງຄວາມພ້ອມ ແລະ ກຽມຕອບໂຕ້, ສັນຍານເຕືອນໄພ ແລະ ການຕີຄວາມໝາຍຂອງສັນຍານດັ່ງກ່າວ.

16.3 ສ້າງ ແລະ ບຳລຸງຮັກສາ ລະບົບການສື່ສານໃນຮູບແບບຕ່າງໆ (ໂທລະສັບ, ແຟກສ໌, ອີເມວລ໌).

ມາດຕາ 17. ຫ້ອງການອຸຕຸນິຍົມ ແລະ ອຸທົກກະສາດ ຕ້ອງເຮັດໜ້າທີ່ໃນຖານະເປັນສະມາຊິກຂອງ NDMC ແລະ ມີຄວາມຮັບຜິດຊອບລວມ ໃນການແຈ້ງຂໍ້ມູນກ່ຽວກັບການເຕືອນໄພລ່ວງໜ້າ ກ່ຽວກັບອຸທົກກະສາດ ໃນທົ່ວປະເທດ.

17.1 ແຕ່ງຕັ້ງຈຸດປະສານງານ ສຳລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກຳມະການຂັ້ນແຂວງ.

17.2 ວິເຄາະຂໍ້ມູນສຳລັບການຄາດຄະເນລ່ວງໜ້າ ແລະ ການເຕືອນໄພ ສຳລັບການບິນ, ວຽກກະສິກຳ, ການຈັດສົ່ງ, ກິລາ, ຊົນລະປະທານ ແລະ ອື່ນ ໆ; ເຮັດການຄະເນລ່ວງໜ້າ ແລະ ການເຕືອນໄພ ສຳລັບເຫດການທີ່ໃກ້ຈະຈັດຂຶ້ນ ທີ່ອາດ ສ້າງຄວາມເສຍຫາຍ ແລະ ສູນເສຍ ຊີວິດ ແລະ ຊັບສິນ.

17.3 ວິເຄາະບັນດາເຫດການຮ້າຍແຮງທີ່ເກີດຂຶ້ນແລ້ວໃນອາດີດ ແລະ ທ່າອ່ຽງອະນາຄົດ; ຕົວຢ່າງການປ່ຽນແປງດິນຟ້າອາກາດ, ຮູບແບບຂອງດິນຟ້າອາກາດ, ສະພາບບັນຍາກາດຂອງດິນ ແລະ ທະເລ, ການຄາດຄະເນດິນຟ້າອາກາດຂອງ ແຕ່ລະ ລະດູການ.

Article 18. ຫ້ອງການສະພາກາແດງລາວ ຕ້ອງເຮັດວຽກໃນຖານະເປັນສະມາຊິກຂອງ NDMC ແລະ ຮັບຜິດຊອບ ໃນການສ້າງແຜນການກຽມຄວາມພ້ອມ ແລະ ການຕອບໂຕ້ ໃນລະດັບຊາດ ແລະ ສ້າງແຜນການສໍາລັບທຸກຫ້ອງການສາຂາ ໃນເຂດທີ່ມີຄວາມສ່ຽງສູງ ແລະ ສ້າງທີມງານນັກອາສາສະໝັກ ສໍາລັບການກຽມຄວາມພ້ອມ ແລະ ການຕອບໂຕ້.

18.1 ແຕ່ງຕັ້ງຈຸດປະສານງານຂອງສະພາກາແດງລາວ ສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ບັນດາຄະນະກໍາມະການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ.

18.2 ຮັບຜິດຊອບການຝຶກອົບຮົມການຄຸ້ມຄອງໄພພິບັດ, ຈັດການຈໍາລອງເຫດການ ແລະ ຝຶກຈໍາລອງໃຫ້ແກ່ນັກອາສະໝັກ ແລະ ສາທາລະນະຊົນທົ່ວໄປ.

18.3 ຮັບຜິດຊອບການປະເມີນສະພາບການແບບໄວວາ ແລະ ຜະລິດຂໍ້ມູນກ່ຽວກັບໄພພິບັດພາຍຫລັງເຫດການໄພພິບັດ ແລະ ເພື່ອເຮັດການປະຕິບັດງານຮ່ວມກັນໃນການກອບກູ້ຊີວິດ ແລະ ບັນເທົາທຸກ ໂດຍປະສານສົມທົບກັບ ສະພາກາແດງ / ອົງການກາແດງຊີກວົງເດືອນ ເພື່ອຊ່ວຍເຫລືອ ຜູ້ປະສົບໄພຈາກໄພພິບັດ.

ມາດຕາ 19. ຜູ້ຕາງໜ້າຂອງສູນກາງຊາວໜຸ່ມຕ້ອງປະຕິບັດງານໃນຖານະທີ່ເປັນສະມາຊິກຂອງ NDMC ແລະ ຮັບຜິດຊອບເອົາຊາວໜຸ່ມເຂົ້າຮ່ວມໃນຖານະເປັນຜູ້ໃຫ້ຂໍ້ມູນແກ່ຊຸມຊົນເພື່ອກະຈາຍຂໍ້ມູນກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດ ໃຫ້ແກ່ ຄົວເຮືອນ ແລະ ຊຸມຊົນ.

19.1 ແຕ່ງຕັ້ງຈຸດປະສານງານສໍາລັບການຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກໍາມະການ ລະດັບແຂວງ, ເມືອງ ແລະ ບ້ານ.

19.2 ກໍານົດຄວາມຕ້ອງການສໍາລັບວິທີການປະຕິບັດໂດຍລວມສໍາລັບ DRR ເພື່ອແກ້ໄຂຄວາມສ່ຽງທີ່ກ່ຽວຂ້ອງກັບ ສາທາລະນະສຸກ, ສິ່ງແວດລ້ອມ, ສາສະໜາ, ສະຖຽນເສດຖະກິດຄົວເຮືອນ ແລະ ຂະແໜງການອື່ນ.

19.3 ການເຂົ້າຮ່ວມໂດຍກົງໃນການຄຸ້ມຄອງໄພພິບັດ ເປັນການສ້າງສະຕິຕື່ນຕົວຂອງຊຸມຊົນ ແລະ ສັງຄົມ ແລະ ເປັນການສະໜັບສະໜູນ ຄວາມພະຍາຍາມຟື້ນຟູ ແລະ ກໍ່ສ້າງຄືນໃໝ່ໃນໄລຍະຫລັງໄພພິບັດ ທີ່ປະຕິບັດໂດຍອໍານາດການປົກຄອງຂັ້ນບ້ານ, ເມືອງ ແລະ ແຂວງ.

ມາດຕາ 20. ຜູ້ຕາງໜ້າຂອງສະຫະພັນແມ່ຍິງເປັນສະມາຊິກຂອງ NDMC ແລະ ຮັບຜິດຊອບໃນການເອົາໃຈໃສ່ຄວາມຕ້ອງການທາງສັງຄົມ, ວັດທະນະທໍາ ແລະ ເສດຖະກິດ ຂອງແມ່ຍິງ, ເດັກນ້ອຍ ແລະ ກຸ່ມທີ່ດ້ອຍໂອກາດທີ່ສຸດ ໃນການຄຸ້ມຄອງໄພພິບັດ ແລະ ຄວາມສ່ຽງ ໂດຍນໍາໃຊ້ ບັນດາເຄື່ອງມືແບບມີສ່ວນຮ່ວມ ເປັນຕົ້ນແມ່ນ ການປະເມີນຄວາມສ່ຽງ ແລະ ຄວາມສາມາດ.

20.1 ແຕ່ງຕັ້ງຈຸດປະສານງານເພື່ອຄຸ້ມຄອງຄວາມສ່ຽງໄພພິບັດ ເພື່ອປະສານງານກັບ NDMO ແລະ ຄະນະກໍາມະການ ລະດັບແຂວງ, ເມືອງ ແລະ ບ້ານ.

20.2 ສົ່ງເສີມການສ້າງຈິດສໍານຶກຂອງແມ່ຍິງ ໃນເຂດທີ່ມີໄພອັນຕະລາຍ ກ່ຽວກັບຄວາມສ່ຽງໄພພິບັດ ແລະ ການສ້າງຄວາມພ້ອມຕໍ່ໄພພິບັດ ແລະ ພັດທະນາຄວາມສາມາດ ຂອງອົງການຈັດຕັ້ງແມ່ຍິງໃນດ້ານການຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ການກຽມຄວາມພ້ອມ.

20.3 ອຳນວຍຄວາມສະດວກການເຂົ້າຮ່ວມຂອງແມ່ຍິງ ໃນວຽກງານບັນເທົາທຸກ, ການຟື້ນຟູ ແລະ ປົວແປງຄືນໃໝ່; ສະໜັບສະໜູນ ການຟື້ນຟູຊີວິດການເປັນຢູ່ຄືນໃໝ່ພາຍຫລັງໄພພິບັດ ສຳລັບແມ່ຍິງທີ່ເອົາຊີວິດລອດຈາກໄພພິບັດ.

## ໝວດ III

## <u>ພາລະບົດບາດ ແລະ ໜ້າທີ່ຂອງກອງເລຂາ</u>

ມາດຕາ 21 NDMO ເຮັດໜ້າທີ່ເປັນກອງເລຂາຂອງ NDMC ໂດຍມີຄວາມຮັບຜິດຊອບຫລາຍດ້ານ ຊຶ່ງລວມທັງ:

21.1 ໃຫ້ຄຳແນະນຳລະດັບຊ່ຽວຊານໃຫ້ແກ່ NDMC.

21.2 ສົ່ງເສີມການປະສານງານກັບບັນດາຈຸດປະສານງານຂອງແຕ່ລະກະຊວງ.

21.3 ສົ່ງເສີມການແກ້ໄຂບັນຫາຫລັງໄພພິບັດ ແລະ ສ້າງຄວາມພ້ອມ ຢູ່ລະດັບທ້ອງຖິ່ນ.

21.4 ຈັດຕັ້ງປະຕິບັດກິດຈະກຳປຸກຈິດສຳນຶກຢູ່ລະດັບຊຸມຊົນ.

21.5 ຈັດການຝຶກອົບຮົມ, ໃຫ້ຂໍ້ແນະນຳ ແລະ ວາງແຜນ ເພື່ອເຮັດໃຫ້ ການຄຸ້ມຄອງຄວາມສ່ຽງໄພພິບັດມີປະສິດທິພາບສູງຂຶ້ນ.

21.6 ສ້າງຕັ້ງທີມງານປະຕິບັດການຄຸ້ມຄອງໄພພິບັດຢູ່ລະດັບສູນກາງ, ແຂວງ ແລະ ເມືອງ.

## ໝວດ IV

## <u>ພັນທະ</u>

ມາດຕາ 22 ສະມາຊິກທັງໝົດຂອງ NDMC ແລະ NDMO ຕ້ອງປະຕິບັດພາລະບົດບາດທີ່ໄດ້ຮັບມອບໝາຍຢ່າງມີຜົນສຳເລັດ ໃນການສະໜັບສະໜູນການຄຸ້ມຄອງຄວາມສ່ຽງໄພພິບັດ.

Article 23 ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ